ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

13-16 ກັນຍາ 2022
ປີທີ 11
ສະບັບທີ 875

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

## ຄະນະຜູ້ແທນຂັ້ນສູງຂອງ ສພຊ ແຫ່ງ ຣາຊະອານາຈັກກຳປູເຈຍ ຢ້ຽມຢາມ ສປປລາວ ຢ່າງເປັນທາງການ



(ສພຊ) ຕອບສະໜອງຕາມການເຊື້ອເຊີນຂອງພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; ສົມເດັດ ອັກຄະ ມະຫາ ໂປເຍຍ ຈັກກຣີ ເຮັງຊຳຣິນ ປະທານສະພາແຫ່ງຊາດ ແຫ່ງ ຣາຊະອານາຈັກກຳປູເຈຍ ແລະ ຄະນະຜູ້ແທນຂັ້ນສູງ ໄດ້ເດີນທາງມາຢ້ຽມຢາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຢ່າງເປັນທາງການ ໃນລະຫວ່າງວັນທີ 14-16 ກັນຍາ 2022.

ໃນຕອນເຊົ້າຂອງວັນທີ 14 ກັນຍາ 2022, ພາຍຫລັງທີ່ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດ (ສພຊ) ແຫ່ງ ຣາຊະອານາຈັກກຳປູເຈຍ ໄດ້ເຂົ້າຮ່ວມພິທີຕ້ອນຮັບຢ່າງເປັນທາງການ ຢູ່ຕໍ່ໜ້າຫໍສະພາແຫ່ງຊາດລາວ ຢ່າງສົມກຽດ ຈາກພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດລາວ ພ້ອມດ້ວຍບັນດາທ່ານຮອງປະທານສະພາແຫ່ງຊາດ, ມີບັນດາທ່ານໃນຄະນະປະຈຳສະພາແຫ່ງຊາດ, ປະທານ-ຮອງປະທານກຳມາທິການ, ຄະນະເລຂາທິການ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງເຂົ້າຮ່ວມພິທີຕ້ອນຮັບຢ່າງພ້ອມພຽງ ແລະ ສົມກຽດແລ້ວ, ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດລາວ ແລະ ກຳປູເຈຍ ໄດ້ດຳເນີນການພົບປະສອງຝ່າຍຢ່າງເປັນທາງການ ເຊິ່ງໃນການພົບປະດັ່ງກ່າວ, ສອງຝ່າຍ ໄດ້ພ້ອມກັນປຶກສາຫາລືກັນຫລາຍບັນຫາສຳຄັນ ເປັນຕົ້ນແມ່ນໄດ້ຮ່ວມກັນຕີລາຄາຄືນກ່ຽວກັບສະພາບການພົວພັນຮ່ວມມືລະຫວ່າງສອງປະເທດລາວ-ກຳປູເຈຍ ກໍຄືການພົວພັນຮ່ວມມື ລະຫວ່າງສອງສະພາແຫ່ງຊາດ ໃນໄລຍະຜ່ານມາ ແລະ ເປັນເອກະພາບກັນ ຕໍ່ກັບທິດທາງແຜນການໃນຕໍ່ໜ້າ ເຊິ່ງສອງຝ່າຍຈະໄດ້ສືບຕໍ່ຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືທີ່ສອງປະທານສະພາແຫ່ງຊາດ ໄດ້ລົງນາມຮ່ວມກັນ ໃນປີ 2019 ໃຫ້ມີປະສິດທິຜົນຍິ່ງຂຶ້ນກວ່າ

ອ່ານຕໍ່ໜ້າ 2

## ມອບອຸປະກອນການສຶກສາ ແລະ ກິລາ ໃຫ້ໂຮງຮຽນຢູ່ເມືອງໝອງແຮດ



ໜ້າ 2

## ກສຕສ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ເຊັນຂໍ້ຕົກລົງຮ່ວມກັນ



ໜ້າ 2

## ຄະນະມິດຕະພາບລັດຖະສະພາ ລາວ-ມົງໂກລີ ຢ້ຽມຢາມ ແລະ ເຮັດວຽກ ຢູ່ປະເທດມົງໂກລີ



(ສພຊ) ໂດຍຕອບສະໜອງຕາມການເຊື້ອເຊີນຂອງທ່ານ ຢໍ ບາທາຣ໌ບີເລັກ (Yondonperenlein BA-ATARBILEG ປະທານຄະນະມິດຕະພາບລັດຖະສະພາ ມົງໂກລີ-ລາວ ໃນລະຫວ່າງວັນທີ 6-12 ກັນຍາ

ອ່ານຕໍ່ໜ້າ 3

## ປາຖະກະຖາວັນສ້າງຕັ້ງ ສະຫະພັນນັກຮົບເກົ່າແຫ່ງຊາດລາວ




(ສພຊ) ເພື່ອທວນຄືນມູນເຊື້ອອັນພິລະອາດຫານຂອງສະຫະພັນນັກຮົບເກົ່າແຫ່ງຊາດລາວ ໃນການເປັນກຳລັງປະຈັນບານໂດຍກົງຢູ່ໃນສະໜາມຮົບ ໃນພາລະກິດຕໍ່ສູ້ປົດປ່ອຍປະເທດຊາດ ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ທັງເປັນການເຜີຍແຜ່, ເຊື່ອມຊຶມໃຫ້ບັນດາສະຫາຍສະມາຊິກພັກ, ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດ ໄດ້ຮັບຮູ້ເຖິງຄຸນສົມບັດສິນທຳປະຕິວັດ, ນ້ຳໃຈເສຍສະຫລະເພື່ອປະເທດຊາດ, ຄວາມມານະອົດທົນຂອງກຳລັງປະກອບອາວຸດ ໃນພາລະກິດປະຕິບັດໜ້າທີ່ວຽກງານ ເພື່ອເປັນບົດຮຽນເຂົ້າໃນການປະຕິບັດໜ້າທີ່ວຽກງານຂອງແຕ່ລະພາກສ່ວນ; ໃນວັນທີ 12 ກັນຍາ 2022 ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມປາຖະກະຖາເນື່ອງໃນໂອກາດວັນສ້າງຕັ້ງສະຫະພັນນັກຮົບເກົ່າແຫ່ງຊາດ ຄົບຮອບ 20 ປີ (9 ກັນຍາ 2002-9 ກັນຍາ 2022) ໃນຫົວຂໍ້: "ມູນເຊື້ອແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງສະຫະພັນນັກຮົບເກົ່າແຫ່ງຊາດລາວ ຕະຫລອດໄລຍະ 20 ປີ ໃຕ້ຮົ່ມທຸງຂອງພັກ" ໂດຍການເຂົ້າຮ່ວມ ແລະ ປາຖະກະຖາຂອງສະຫາຍ ພົທ. ແສງນວນ ໄຊຍະລາດ ປະທານສະຫະພັນນັກຮົບເກົ່າແຫ່ງຊາດລາວ, ມີສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະ

ອ່ານຕໍ່ໜ້າ 3

## ສຳມະນາກ່ຽວກັບນະໂຍບາຍ ແລະ ການລົງທຶນ ເຂົ້າໃນລະບົບການປົກປ້ອງສັງຄົມ



(ສພຊ) ເພື່ອຍົກສູງຄວາມຮູ້ກ່ຽວກັບແນວຄວາມຄິດ ແລະ ຄວາມສຳຄັນຂອງລະບົບປົກປ້ອງສັງຄົມ, ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແລະ ການລົງທຶນເຂົ້າໃນວຽກງານປົກປ້ອງສັງຄົມ ກຳມາທິການວັດທະນາທຳ-ສັງຄົມ (ກວທສ) ສະພາແຫ່ງຊາດ ໄດ້ຈັດກອງປະຊຸມສຳມະນາກ່ຽວກັບນະໂຍບາຍ ແລະ ການລົງທຶນ ເຂົ້າໃນລະບົບການປົກປ້ອງສັງຄົມ ໃຫ້ແກ່ສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການຂອງ ກວທສ ໃນລະຫວ່າງວັນທີ 12-13 ກັນຍາ 2022 ທີ່ໂຮງແຮມຈຳປາສັກແກຣມ ແຂວງຈຳປາສັກ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ, ທ່ານ ແກ້ວລັດຕະນະ ສີຫາວົງ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງຈຳປາສັກ, ທ່ານ ນາງ ເລີບລິນ ເດ ຫົວໜ້າໂຄງການປົກປ້ອງສັງຄົມ, ອົງການແຮງງານສາກົນ ແລະ

ອ່ານຕໍ່ໜ້າ 3


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 5


ໜ້າ 7

## ມອບອຸປະກອນ...

(ສພຊ) ວັນທີ 10 ກັນຍາ 2022, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍທ່ານ ບຸນໂຮມ ເທດທານີ ປະທານສະພາປະຊາຊົນແຂວງຊຽງຂວາງ ແລະ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ; ມີຄະນະຕິດຕາມຈາກສະພາແຫ່ງຊາດ, ສະພາປະຊາຊົນແຂວງຊຽງຂວາງ, ສະມາຊິກສະພາປະຊາຊົນແຂວງຊຽງຂວາງ ປະຈຳເມືອງໜອງແຮດ ໄດ້ໄປຢ້ຽມຢາມ ແລະ ມອບອຸປະກອນການສຶກສາ ແລະ ກິລາ ໃຫ້ໂຮງຮຽນປະຖົມສົມບູນບ້ານແກ່ວຕະປູ, ໂຮງຮຽນປະຖົມບ້ານໜອງອໍ້, ໂຮງຮຽນປະຖົມສົມບູນບ້ານໜອງຊ້າງ; ສຳລັບເຄື່ອງອຸປະກອນທີ່ນຳໄປມອບໃນຄັ້ງນີ້ ປະກອບມີ: ປຶ້ມຂຽນ, ຊຸດສີລະບາຍຮູບພາບ, ບານເຕະ, ປິ່ງປ໋ອງ, ຕະກໍ້ ແລະ ອື່ນໆ ອີກຈຳນວນໜຶ່ງ ລວມມູນຄ່າ 50 ລ້ານກວ່າກີບ ໂດຍໄດ້ຮັບທຶນສະໜັບສະໜູນຈາກມູນນິທິລ້ານຊ້າງພັດທະນານ້ຳຂອງ ແລະ ຄອບຄົວຂອງທ່ານຮອງປະທານສະພາແຫ່ງຊາດ.



ໃນໂອກາດດັ່ງກ່າວ, ບັນດາທ່ານອຳນວຍການຂອງໂຮງຮຽນ ໄດ້ລາຍງານກ່ຽວກັບສະພາບການໂດຍຫຍໍ້ຂອງໂຮງຮຽນ ເຊິ່ງເຫັນວ່ານັກຮຽນຈຳນວນຫລາຍຍັງຂາດເຂີນເຄື່ອງນຸ່ງກັນໜາວ ແລະ ອຸປະກອນການຮຽນ, ຂາດງົບປະມານໃນການສ້ອມແປງໂຮງຮຽນທີ່ເປ່ເພ.

ໂອກາດນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຊົມເຊີຍບັນດາພະນັກງານ, ຄູສອນຂອງໂຮງຮຽນທີ່ໄດ້ເອົາໃຈໃສ່ໃນການສິດສອນນັກຮຽນຂອງຕົນ ເຖິງແມ່ນວ່າຈະພົບບັນຫາຫຍຸ້ງຍາກຕ່າງໆກໍຕາມ, ທ່ານຍັງໄດ້ເນັ້ນໜັກໃຫ້ຄູອາຈານທຸກທ່ານໃຫ້ສືບຕໍ່ເປັນແມ່ພິມທີ່ດີຂອງຊາດ, ສິດສອນໃຫ້ເດັກກາຍເປັນອະນາຄົດຂອງຊາດທີ່ມີຄຸນນະພາບ, ກາຍເປັນຄົນດີຂອງຊາດ, ຂອງສັງຄົມ ແລະ ປະເທດຊາດ.

(ນາງ ປາກາລັກ ພິມມີໄຊ)

## ຄະນະ...

ເກົ່າ, ສືບຕໍ່ການແລກປ່ຽນຄະນະຜູ້ແທນນຳກັນໃນທຸກລະດັບ, ແລກປ່ຽນຂໍ້ມູນ-ຂ່າວສານ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ ຂອງອົງການນິຕິບັນຍັດ, ການສະໜັບສະໜູນກັນໃນເວທີລັດຖະສະພາພາກພື້ນແລະສາກົນ; ພ້ອມນັ້ນ, ສອງຝ່າຍ ໄດ້ເປັນເອກະພາບທີ່ຈະຮ່ວມມືກັນຊຸກຍູ້ ແລະ ສົ່ງເສີມ ໃຫ້ຂະແໜງການທີ່ກ່ຽວຂ້ອງຂອງລັດຖະບານ ຂອງສອງປະເທດ ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງຕ່າງໆ ທີ່ໄດ້ລົງນາມຮ່ວມກັນ ໃຫ້ໄດ້ຮັບປະສິດຜົນສູງ ໂດຍສະເພາະແມ່ນການຊຸກຍູ້ລັດຖະບານທັງສອງປະເທດໃຫ້ມີການບັນລຸການເຊັນສົນທິສັນຍາວ່າດ້ວຍເສັ້ນຊາຍແດນທີ່ໄດ້ປັກຫລັກໝາຍສຳເລັດ 86% ແລະ ສືບຕໍ່ເຮັດໃຫ້ເສັ້ນຊາຍແດນສອງປະເທດ ເປັນຊາຍແດນແຫ່ງສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາຢ່າງຍືນຍົງ, ຕອບສະໜອງຜົນປະໂຫຍດທີ່ແທ້ຈິງຂອງປະຊາຊົນສອງຊາດ; ປະທານສະພາແຫ່ງຊາດລາວ ໄດ້ສະແດງຄວາມເຊື້ອໝັ້ນວ່າດ້ວຍບົດຮຽນອັນອຸດົມສົມບູນຂອງປະທານສະພາແຫ່ງຊາດ ແຫ່ງ ຣາຊະອານາຈັກກຳປູເຈຍ, ຝ່າຍກຳປູເຈຍ ຈະແລກປ່ຽນບົດຮຽນໃນການເປັນປະທານໄອປາ (AIPA) ຄັ້ງທີ 43 ເຊິ່ງຈະຈັດຂຶ້ນຢູ່ທີ່ນະຄອນຫລວງພະນົມເປັນ ໃນເດືອນພະຈິກ 2022; ພ້ອມກັນນີ້, ສະພາແຫ່ງຊາດລາວ ມີຄວາມຍິນດີທີ່ຈະເຂົ້າຮ່ວມ ແລະ ສະໜັບສະໜູນ ສະພາແຫ່ງຊາດກຳປູເຈຍ ເປັນເຈົ້າພາບກອງປະຊຸມ AIPA ຄັ້ງທີ 43 ແລະ ກອງປະຊຸມປິ່ນອ້ອມອື່ນໆ.

ຫລັງຈາກພົບປະສອງຝ່າຍສຳເລັດແລ້ວ, ສອງປະທານສະພາແຫ່ງຊາດ ໄດ້ສືບຕໍ່ຮ່ວມກັນປູກຕົ້ນໄມ້ເພື່ອເປັນທີ່ລະນຶກ ຢູ່ສວນຂ້າງຫໍສະພາແຫ່ງຊາດ; ໃນໂອກາດນີ້, ທ່ານປະທານກຳມາທິການການຕ່າງປະເທດສະພາແຫ່ງຊາດລາວ ກໍໄດ້ພົບປະກັນຄູ່ຮ່ວມຕຳແໜ່ງຂອງສະພາແຫ່ງຊາດກຳປູເຈຍ ແລະ ສອງປະທານຄະນະມິດຕະພາບລັດຖະສະພາ ລາວ-ກຳປູເຈຍ, ກຳປູເຈຍ-ລາວ ກໍໄດ້ພົບປະສອງຝ່າຍຮ່ວມກັນເພື່ອເສີມຂະຫຍາຍການຮ່ວມມືນຳກັນ ໃຫ້ມີຄວາມເລິກເຊິ່ງຍິ່ງກວ່າເກົ່າ.

ຕອນບ່າຍຂອງດຽວກັນ, ປະທານສະພາແຫ່ງຊາດກຳປູເຈຍ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂໍ່ານັບພະນະທ່ານ ທອງລຸນ ສີສຸລິດ ປະທານປະເທດ ແຫ່ງ ສປປລາວ ແລະ ພົບປະກັບພະນະທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີ ແຫ່ງ ສປປລາວ; ໃນການພົບປະດັ່ງກ່າວ, ການນຳຂັ້ນສູງທັງສອງຝ່າຍ ໄດ້ຕີລາຄາການພົວພັນຮ່ວມມືທີ່ມີມູນເຊື້ອອັນດີງາມຖານບ້ານໃກ້ເຮືອນຄຽງ, ບ້ານແກ່ວເມືອງດອງ ແລະ ຄວາມສາມັກຄີຮັກແພງຂອງສອງປະເທດ ແລະ ປະຊາຊົນສອງຊາດລາວ-ກຳປູເຈຍ. ພ້ອມດຽວກັນນີ້, ການນຳ ຂອງ ສປປລາວ ຕາງໜ້າໃຫ້ແກ່ລັດຖະບານ, ສະພາແຫ່ງຊາດ ແລະປະຊາຊົນລາວບັນດາເຜົ່າສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ການສະໜັບສະໜູນ ແລະ ຊ່ວຍເຫລືອຮ່ວມມື ຂອງລັດຖະບານ, ສະພາແຫ່ງຊາດ ແລະ ປະຊາຊົນ ແຫ່ງ ຣາຊະອານາຈັກກຳປູເຈຍ ທີ່ມີຕໍ່ ສປປລາວ ທັງໃນພາລະກິດປົດປ່ອຍປະເທດຊາດ ກໍຄືໃນໄລຍະປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນປັດຈຸບັນ.

ໃນຕອນຄ່ຳຂອງວັນດຽວກັນນັ້ນ,ພະນະທ່ານປະທານສະພາແຫ່ງຊາດລາວ ກໍໄດ້ເປັນເຈົ້າພາບຈັດງານລ້ຽງຕ້ອນຮັບຢ່າງເປັນທາງການ ເພື່ອເປັນກຽດແກ່ສົມເດັດ ເຮັງຊຳຣິນ ປະທານສະພາແຫ່ງຊາດກຳປູເຈຍ ແລະ ຄະນະຜູ້ແທນຂັ້ນສູງ ເຊິ່ງດຳເນີນໄປດ້ວຍບັນຍາກາດໄມຕີຈິດມິດຕະພາບ, ອົບອຸ່ນ ແລະ ຄວາມສາມັກຄີຮັກແພງສະໜິດສະໜົມແຕ່ຕົ້ນຕະຫລອດປາຍ.

ໃນໂອກາດທີ່ເດີນທາງມາຢ້ຽມຢາມຄັ້ງນີ້, ປະທານສະພາແຫ່ງຊາດກຳປູເຈຍ ພ້ອມດ້ວຍຄະນະ ຍັງຈະໄດ້ໄປຢ້ຽມຢາມດ່ານສາກົນສິນຄ້າທ່າບົກທ່ານາແລ້ງ ແລະ ເຂດໂລຊິດສະຕິກ ນະຄອນຫລວງວຽງຈັນຕື່ມອີກ.

## ກສຕສ...

(ສພຊ) ວັນທີ 9 ກັນຍາຜ່ານມາ, ທີ່ຫ້ອງປະຊຸມຂອງກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ມີພິທີລົງລາຍເຊັນຂໍ້ຕົກລົງຮ່ວມ ລະຫວ່າງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ໂດຍການລົງລາຍເຊັນຮ່ວມລະຫວ່າງທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ທ່ານ ວຽງສະຫວັດ ສີພັນດອນ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ໂດຍການເຂົ້າຮ່ວມຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ບັນດາທ່ານຮອງປະທານກຳມາທິການ, ຮອງລັດຖະມົນຕີ, ຫົວໜ້າກົມ, ຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມຂອງກຳມາທິການ ແລະ ກະຊວງກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພິຍານ.

ໃນພິທີດັ່ງກ່າວ, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ໄດ້ກ່າວວ່າ: ຂໍ້ຕົກລົງຮ່ວມ ວ່າດ້ວຍການປະສານງານ ລະຫວ່າງ ກສຕສ ສະພາແຫ່ງຊາດ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ຖືວ່າເປັນຂໍ້ຕົກລົງຮ່ວມສະບັບທຳອິດ ທີ່ ກສຕສ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ລົງລາຍເຊັນຮ່ວມກັນເປັນລາຍລັກອັກສອນ ນັບແຕ່ກຳມາທິການ ແລະ ກະຊວງ ໄດ້ຮັບການສ້າງຕັ້ງຂຶ້ນ. ເຖິງແມ່ນວ່າໄລຍະຜ່ານມາກຳມາທິການ ແລະ ກະຊວງ ໄດ້ມີການພົວພັນ, ປະສານງານ ແລະ ເຮັດວຽກຮ່ວມກັນຢ່າງໃກ້ຊິດມາຕະຫລອດ ໂດຍສະເພາະການຄົ້ນຄວ້າພິຈາລະນາໂຄງການລົງທຶນ ຫລື ວຽກງານທີ່ພົວພັນກັບຂົງເຂດໂຍທາທິການ ແລະ ຂົນສົ່ງ ກ່ອນຈະນຳເຂົ້າພິຈາລະນາໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ, ແຕ່ກໍຍັງບໍ່ທັນມີນິຕິກຳສະເພາະທີ່ເປັນບ່ອນອີງໃນການພົວພັນປະສານງານເຊິ່ງກັນແລະກັນ ເຊິ່ງຂໍ້ຕົກລົງຮ່ວມສະບັບດັ່ງກ່າວທີ່ໄດ້ຮ່ວມກັນລົງລາຍເຊັນໃນມື້ນີ້ແມ່ນໄດ້ກຳນົດລະອຽດກ່ຽວກັບຫລັກການ, ຂອບເຂດ, ລະບຽບການ, ເນື້ອໃນ, ຂັ້ນຕອນ, ວິທີການປະສານງານລະຫວ່າງ ກສຕສ ສະພາແຫ່ງຊາດ ກັບກະຊວງໂຍທາທິການ ແລະ ຂົນສົ່ງ ໃນການຄົ້ນຄວ້າ, ປຶກສາຫາລື, ສະໜອງຂໍ້ມູນ-ຂ່າວສານ ໃນການກະກຽມເນື້ອໃນກອງປະຊຸມຕ່າງໆ ທີ່ຕິດພັນກັບວຽກງານໂຍທາທິການ ແລະ ຂົນສົ່ງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ລັດຖະບານຕາມພາລະບົດບາດ, ໜ້າທີ່ ແລະ ສິດຂອງຕົນ; ທັງໝົດນີ້ກໍເພື່ອແນໃສ່ຮັບປະກັນການເປັນເສນາທິການທີ່ດີໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ ໃນການປະຕິບັດໜ້າທີ່ວຽກງານ ໃຫ້ມີປະສິດທິພາບ, ປະສິດທິຜົນ, ວ່ອງໄວ, ຮັດກຸມ ແລະ ທັນເວລາ ອັນສຳຄັນກໍແມ່ນປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ; ພ້ອມກັນນີ້, ຍັງເຫັນວ່າຂໍ້ຕົກລົງຮ່ວມສະບັບນີ້ ຍັງຈະເປັນເຄື່ອງມືໜຶ່ງ ໃນການປະກອບສ່ວນຊ່ວຍໃນການສ້າງຄວາມເຂັ້ມແຂງທາງດ້ານວິຊາການໃຫ້ແກ່ພະນັກງານ-ລັດຖະກອນ ຂອງກຳມາທິການ ແລະ ກະຊວງ ທັງຈະເຮັດໃຫ້ມີການເຄື່ອນໄຫວວຽກງານຮ່ວມກັນ ແລະ ຮູ້ຈັກຮັກແພງ ໃກ້ຊິດສະໜິດສະໜົມກັນຫລາຍຂຶ້ນກວ່າເກົ່າ.

(ສອນສັກ ວັນວິໄຊ)

## ເລື່ອງເດັ່ນ, ຂ່າວເດັດ

\# ຄັດໂດຍ: ຫອມສະນິດ

*▫ ສະມາຄົມຫັດຖະກຳລາວຮ່ວມກັບ ບໍລິສັດ ມິສທິນ ກ້າວໜ້າລາວ ຈຳກັດ ຈະຈັດງານສັບປະດາຫັດຖະກຳຊົນເຜົ່າ ໃນວັນທີ 8-18 ກັນຍາ 2022 ທີ່ສູນການຄ້າພາກຊັນ ນະຄອນຫລວງວຽງຈັນ ເພື່ອສ້າງຂະບວນການສະເຫລີມສະຫລອງວັນສ້າງຕັ້ງສະມາຄົມຫັດຖະກຳລາວ 1 ພະຈິກ ຄົບຮອບ 25 ປີ ແລະ ເປັນການກະກຽມໃຫ້ແກ່ການຈັດງານມະຫາກຳສີມືຫັດຖະກຳລາວ ຄັ້ງທີ 21 ເຊິ່ງຈະຈັດຂຶ້ນໃນທ້າຍເດືອນຕຸລາ 2022 ທີ່ຈະມາເຖິງນີ້ ທັງເພື່ອຈັດຫາກາລະໂອກາດໃຫ້ຊຸມຊົນ ແລະ ລູກຄ້າຜູ້ມາທ່ຽວຊົມ ແລະ ຊື້ ໄດ້ເຫັນຄວາມຫລາກຫລາຍຂອງເຄື່ອງຫັດຖະກຳຊົນເຜົ່າ ໃນ ສປປລາວ ສຳລັບບັນດາຜະລິດຕະພັນຫັດຖະກຳຊົນເຜົ່າທີ່ຈະນຳມາວາງສະແດງ ແລະ ຂາຍໃນງານດັ່ງກ່າວປະກອບມີ ແຜ່ນແພ ແລະ ເຄື່ອງນຸ່ງຊົນເຜົ່າ, ເຄື່ອງປະດັບ, ເຄື່ອງຈັກສານ, ເຄື່ອງປັ້ນດິນເຜົາ, ຮູບແຕ້ມ, ໄມ້ແກະສະຫລັກ, ອາຫານສຳເລັດຮູບພື້ນເມືອງ, ເສື້ອຜ້າ-ລາຄາໂຮງງານ, ສິນຄ້າໂອດ໋ອບລາວ (ODOP) ແລະ ອື່ນໆ ທີ່ກ່ຽວກັບຫັດຖະກຳຊົນເຜົ່າ.*

***ນສພ. ວຽງຈັນໃໝ່ 06/09/2022***

*▫ ໂຄງການກໍ່ສ້າງ ຂົວມິດຕະພາບ ລາວ-ໄທ ແຫ່ງທີ 5 (ບໍລິຄຳໄຊ-ບຶງການ) ໄດ້ເລີ່ມລົງມືກໍ່ສ້າງແຕ່ເດືອນສິງຫາ 2019 ເຊິ່ງເປັນໂຄງການເງິນກູ້ຈາກອົງການຄວາມຮ່ວມມືທາງດ້ານເສດຖະກິດກັບປະເທດເພື່ອນບ້ານ(ອົງການມະຫາຊົນ) ຈາກປະເທດໄທ (ອົງການ NEDA), ລັດຖະບານລາວໄດ້ຮັບເງິນກູ້ຢືມເປັນຈຳນວນເງິນ 1.380.067.000 ບາດ (ສະກຸນເງິນໄທ) ໄດ້ແບ່ງອອກເປັນສອງສັນຍາຄື: ສັນຍາທີ 1 ແມ່ນສັນຍາກໍ່ສ້າງຂົວຂ້າມນ້ຳຂອງເບື້ອງປະເທດລາວ ມີລວງຍາວທັງໝົດ 535 ແມັດ ແລະ ສັນຍາທີ 2 ແມ່ນການກໍ່ສ້າງທາງເຂົ້າຂົວ ລວງຍາວທັງໝົດ 2.775 ແມັດ ລວມທັງອາຄານດ່ານ ແລະ ສິ່ງອຳນວຍຄວາມສະດວກອື່ນໆເບື້ອງປະເທດລາວ, ມີໄລຍະເວລາກໍ່ສ້າງ 30 ເດືອນ ແລະ ໄລຍະຄ້ຳປະກັນ 24 ເດືອນ.*

***ນສພ. ປະຊາຊົນ 07/09/2022***

*▫ ເນື່ອງໃນໂອກາດສະເຫລີມສະຫລອງວັນສາຍຕາໂລກ ປະຈຳປີ 2022 ໂຮງໝໍມະໂຫສົດ ແລະ ທີມງານວິຊາການຕາໂຮງໝໍມະໂຫສົດ ໂດຍການໃຫ້ທຶນສະໜັບສະໜູນຈາກລັດຖະບານອົດສະຕຣາລີ ຜ່ານມູນນິທິເຟຣດໂຮໂລຈະໄດ້ຈັດກວດວັດແທກສາຍຕາໂດຍບໍ່ເສຍຄ່າໃຫ້ປະຊາຊົນຜູ້ທີ່ມີບັນຫາທາງສາຍຕາວັນທີ 22 ກັນຍາ 2022 ທີ່ໂຮງໝໍມະໂຫສົດ (ຫ້ອງປະຊຸມໃຫຍ່ອາຄານ 8 ຊັ້ນ) ນະຄອນຫລວງວຽງຈັນ ນັບແຕ່ເວລາ 8:30-14:30ໂມງ ເພື່ອກວດຊອກຄົ້ນຫາຜູ້ທີ່ມີບັນຫາທາງສາຍຕາມາດຳເນີນການປິ່ນປົວວັນທີ 13 ຕຸລາ 2022 ເຊິ່ງເປັນວັນສາຍຕາໂລກ; ດັ່ງນັ້ນ, ຜູ້ທີ່ມີບັນຫາທາງສາຍຕາສາມາດໂທສອບຖາມຂໍ້ມູນໄດ້ທີ່ເບີໂທ 020 55400236, 020 98236232, 020 77769971, 020 56230998, 020 59544448 ແລະ 020 55793359.*

***ນສພ. ວຽງຈັນໃໝ່ 13/09/2022***




## ປາຖະກະຖາ...

ບໍລິຫານງານພັກສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ; ບັນດາສະຫາຍຄະນະປະຈຳພັກສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ປະທານ-ຮອງປະທານກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກ, ສະມາຊິກພັກ, ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດເຂົ້າຮ່ວມ.

ໂອກາດນີ້, ສະຫາຍ ພົທ. ແສງນວນ ໄຊຍະລາດ ໄດ້ປາຖະກະຖາເລົ່າຄືນປະຫວັດ ແລະ ສະພາບແວດລ້ອມ, ຄວາມສຳຄັນ ແລະ ຄວາມຈຳເປັນ ຂອງການສ້າງຕັ້ງສະຫະພັນນັກຮົບເກົ່າ, ທັດສະນະຂອງພັກປະຊາຊົນປະຕິວັດລາວ ຕໍ່ກັບສະຫະພັນນັກຮົບເກົ່າ, ມູນເຊື້ອ, ການເຕີບໃຫຍ່ຂະຫຍາຍຕົວ ແລະ ຜົນງານທີ່ພົ້ນເດັ່ນຂອງວັນດັ່ງກ່າວ ໃນຕະຫລອດ 20 ປີຜ່ານມາ ເຊິ່ງມີບາງຕອນທ່ານໄດ້ກ່າວວ່າ: "ນັກຮົບ" ແມ່ນຜູ້ທີ່ມີຄວາມອົງອາດກ້າຫານ, ຊຳນິຊຳນານໃນການສູ້ຮົບ, ແມ່ນນັກຕໍ່ສູ້ປະຈັນບານໂດຍກົງຢູ່ສະໜາມຮົບ, ນັກຮົບຂອງກອງທັບປະຊາຊົນລາວ ແມ່ນຜູ້ທີ່ໄດ້ເຝິກອົບຮົມເຊື່ອມຊຶມທາງດ້ານທິດສະດີການເມືອງ, ບຳລຸງ-ກໍ່ສ້າງທາງດ້ານວິຊາການທະຫານ, ສິນລະປະຍຸດ-ຍຸດທະວິທີ ແລະ ວິຊາສະເພາະອື່ນໆຢູ່ໃນກົມກອງ, ຈາກບັນດາໂຮງຮຽນຢູ່ພາຍໃນ ແລະ ຕ່າງປະເທດ, "ນັກຮົບເກົ່າລາວ" ໝາຍເຖິງອາດີດນັກຮົບປະຕິວັດໃນຖັນແຖວກຳລັງປະກອບອາວຸດຂອງປະຊາຊົນລາວ, ແມ່ນນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫລວດທີ່ໄດ້ຮັບບຳນານ, ບຳເນັດ ຫລື ເສຍອົງຄະຍ້ອນການສູ້ຮົບ, ຮັບໃຊ້ການສູ້ຮົບ, ການປະຕິບັດໜ້າທີ່ໃນພາລະກິດຕໍ່ສູ້ປົດປ່ອຍຊາດ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ໃນຕອນທ້າຍຂອງພິທີ, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ກໍໄດ້ມອບກະຕ່າຂອງຂວັນໃຫ້ແກ່ສະຫາຍປະທານສະຫະພັນນັກຮົບເກົ່າແຫ່ງຊາດລາວ ເພື່ອອວຍພອນເນື່ອງໃນໂອກາດວັນສຳຄັນດັ່ງກ່າວ.

(ນາງ ສຸພາວັນ ທອມສະນິດ)

## ສຳມະນາ...

ທ່ານ ນາງ ຊາຣາ ເຊກເກັນເນສ ຜູ້ຕາງໜ້າອົງການສະຫະປະຊາຊາດ ປະຈຳ ສປປລາວ; ເຂົ້າຮ່ວມກອງປະຊຸມສຳມະນາໃນຄັ້ງນີ້, ມີບັນດາທ່ານສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງແຂວງບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ, ອັດຕະປື ແລະ ຜູ້ຕາງໜ້າຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ພະນັກງານທີ່ກ່ຽວຂ້ອງຈາກສະພາແຫ່ງຊາດ, ອົງການຢູນິເຊບ, ອົງການສະຫະປະຊາຊາດ ປະຈຳ ສປປລາວ, ອົງການແຮງງານສາກົນ ແລະ ວິທະຍາກອນຈາກອົງການແຮງງານສາກົນ ເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການສະເໜີບົດຮຽນຂອງບັນດາຊ່ຽວຊານຂອງອົງການແຮງງານສາກົນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຕົ້ນແມ່ນລະບົບປົກປ້ອງສັງຄົມ-ແນວຄວາມຄິດ ແລະ ຄວາມສຳຄັນຂອງລະບົບປົກປ້ອງສັງຄົມ; ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ, ປະສົບການດ້ານການປົກປ້ອງສັງຄົມຂອງສາກົນ; ບັນດານິຕິກຳ ແລະ ນະໂຍບາຍດ້ານການປົກປ້ອງສັງຄົມແຫ່ງຊາດ, ກົນໄກການຈັດຕັ້ງຂອງຄະນະກຳມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມ; ການລົງທຶນໃສ່ລະບົບປົກປ້ອງສັງຄົມ ຂອງ ສປປລາວ; ການສະໜອງລະບົບປົກປ້ອງສັງຄົມ ໂດຍຜ່ານການຂະຫຍາຍລະບົບການຈ້າງງານ ເພື່ອຮັບມືກັບວິກິດການທີ່ເກີດຂຶ້ນໃນ ສ.ເກົາຫລີ; ບົດຮຽນຈາກໂຄງການທົດລອງອຸດໜູນແມ່ ແລະ ເດັກ; ບົດບາດຂອງສະພາແຫ່ງຊາດ ຕໍ່ວຽກງານປົກປ້ອງສັງຄົມ ຢູ່ ສປປລາວ ເພື່ອສ້າງຄວາມເຂັ້ມແຂງໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ ກ່ຽວກັບວຽກງານດັ່ງກ່າວ ແລະ ນຳເອົາບົດຮຽນໄປໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ.

ການສຳມານາຄັ້ງນີ້, ແມ່ນໄດ້ຮັບການສະໜັບສະໜູນໂດຍອົງການແຮງງານສາກົນ (ILO) ແລະ ອົງການສະຫະປະຊາຊາດ (UNICEF) ປະຈຳ ສປປລາວ ໂດຍຜ່ານກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

(ນາງ ກຸກກິກ ບຸດດາໄຊ)



## ຄະນະມິດ...

2022 ທ່ານ ພົຕ. ປອ. ວົງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ທັງເປັນປະທານຄະນະມິດຕະພາບລັດຖະສະພາລາວ-ມົງໂກລີ ຂອງສະພາແຫ່ງຊາດລາວ ພ້ອມດ້ວຍຄະນະເດີນທາງໄປຢ້ຽມຢາມ ແລະ ເຮັດວຽກ ຢູ່ປະເທດມົງໂກລີ, ຈຸດປະສົງຂອງການຢ້ຽມຢາມ ແລະ ເຮັດວຽກໃນຄັ້ງນີ້ ເພື່ອສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນການທູດ ລາວ-ມົງໂກລີ ຄົບຮອບ 60 ປີ, ຍັງເປັນການປະກອບສ່ວນຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ດີ ລະຫວ່າງ ລາວ-ມົງໂກລີ ກໍຄືການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດ ແຫ່ງ ສປປ ລາວ ແລະ ສະພາຄູຣານໃຫຍ່ ແຫ່ງມົງໂກລີ ໃຫ້ນັບມື້ນັບຂະຫຍາຍຕົວ ແລະ ເປັນຮູບປະທຳຫລາຍຂຶ້ນ.

ໃນການຢ້ຽມຢາມ ແລະ ເຮັດວຽກຄັ້ງນີ້, ຄະນະມິດຕະພາບລັດຖະສະພາລາວ-ມົງໂກລີ, ມົງໂກລີ-ລາວ ໄດ້ພົບປະສອງຝ່າຍນຳກັນທີ່ທຳນຽບແຫ່ງລັດຂອງມົງໂກລີ ເຊິ່ງໄດ້ຕີລາຄາຄືນການພົວພັນຮ່ວມມືໃນໄລຍະຜ່ານມາ ແລະ ພ້ອມກັນປຶກສາຫາລືທິດທາງແຜນການພົວພັນຮ່ວມມືໃນຕໍ່ໜ້າ ລະຫວ່າງ ຄະນະມິດຕະພາບລັດຖະສະພາລາວ-ມົງໂກລີ, ມົງໂກລີ-ລາວ ໃນນາມທີ່ເປັນກົນໄກໜຶ່ງຂອງສອງອົງການນິຕິບັນຍັດລາວ-ມົງໂກລີ ເພື່ອຊຸກຍູ້ ແລະ ສົ່ງເສີມການພົວພັນ ແລະ ຮ່ວມມືລະຫວ່າງສອງອົງການນິຕິບັນຍັດ, ທັງສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືທີ່ດີລະຫວ່າງ ສປປລາວ ແລະ ມົງໂກລີ ຕະຫລອດໄລຍະຜ່ານມາ ໂດຍສະເພາະຕີລາຄາການພົວພັນຮ່ວມມືຂອງສອງອົງການນິຕິບັນຍັດ, ກໍຄືຄະນະມິດຕະພາບລັດຖະສະພາລາວ-ມົງໂກລີ, ສອງຝ່າຍ ໄດ້ເຫັນດີເປັນເອກະພາບກັນວ່າ ການພົວພັນຮ່ວມມືໄດ້ສືບຕໍ່ເສີມຂະຫຍາຍຢ່າງຕໍ່ເນື່ອງ ແລະ ເຂົ້າສູ່ລວງເລິກເປັນກ້າວໆມາ ເຊິ່ງສອງຝ່າຍຈະໄດ້ພ້ອມກັນຊຸກຍູ້ໃຫ້ມີການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແຕ່ສູນກາງລົງຮອດທ້ອງຖິ່ນ ລະຫວ່າງ ສອງປະເທດ ໂດຍສະເພາະລະຫ່ວາງສະພາແຫ່ງຊາດລາວ ແລະ ສະພາຄູຣານໃຫຍ່ ແຫ່ງມົງໂກລີ ມີການພົວພັນຮ່ວມມືຢ່າງເປັນປະຈຳຕໍ່ເນື່ອງ ເປັນຕົ້ນແມ່ນສອງຝ່າຍໄດ້ມີການແລກປ່ຽນຄະນະຜູ້ແທນຢ້ຽມຢາມເຊິ່ງກັນແລະກັນ, ມີການສົ່ງສານອວຍພອນກັນໃນວັນສຳຄັນຕ່າງໆເຊິ່ງກັນແລະກັນ. ພ້ອມນີ້; ຍັງເຫັນວ່າການພົວພັນຮ່ວມມືທາງດ້ານເສດຖະກິດ, ການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ ໃນໄລຍະຜ່ານມາ ແມ່ນຍັງມີບໍ່ຫລາຍ, ແຕ່ຂະແໜງການກ່ຽວຂ້ອງຂອງສອງຝ່າຍກໍໄດ້ພະຍາຍາມຊຸກຍູ້ ເພື່ອໃຫ້ມີການຮ່ວມມືໃນດ້ານດັ່ງກ່າວຫລາຍຂຶ້ນ ອັນພົ້ນເດັ່ນກວ່າໝູ່ແມ່ນດ້ານສາທາລະນະສຸກ, ກະສິກຳ ແລະ ລ້ຽງສັດ ເຊິ່ງຝ່າຍມົງໂກລີ ໄດ້ຊ່ວຍສ້າງ, ຟື້ນຟູໂຮງໝໍ ແລະ ສົ່ງຊ່ຽວຊານແພດໝໍມາປະຈຳຢູ່ແຂວງຊຽງຂວາງ, ໄດ້ມອບແກະຈຳນວນພັນກວ່າໂຕໃຫ້ແກ່ລາວ ເຊິ່ງກາຍເປັນສັນຍາລັກໜຶ່ງໃຫ້ແກ່ການພົວພັນຮ່ວມມືສອງປະເທດ, ສອງຝ່າຍເຫັນວ່າເນື່ອງຈາກການແຜ່ລະບາດຂອງພະຍາດໂຄວິດ-19 ຜ່ານມາສອງຝ່າຍບໍ່ສາມາດໄປມາຫາສູ່ກັນໄດ້ ແຕ່ການພົວພັນກໍບໍ່ໄດ້ຢຸດສະງັກ ແຕ່ລະຂະແໜງການຂອງສອງປະເທດຍັງສືບຕໍ່ສົ່ງສານອວຍພອນ, ສານຊົມເຊີຍນຳກັນເນື່ອງໃນໂອກາດສຳຄັນຕ່າງໆຂອງສອງປະເທດ; ພ້ອມນີ້, ຍັງໄດ້ປຶກສາຮ່ວມກັນເພື່ອຊຸກຍູ້ສົ່ງເສີມການຮ່ວມມືທາງດ້ານການພັດທະນາຊັບພະຍາກອນມະນຸດ, ການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ ລະຫວ່າງປະເທດຕື່ມອີກ, ໂດຍອີງໃສ່ທ່າແຮງຂອງສອງຝ່າຍ ຄະນະຜູ້ແທນຍັງເຂົ້າຢ້ຽມຂຳນັບທ່ານ ກ. ຊັງຕັງຊາຫາຣ໌ ປະທານສະພາຄູຣານໃຫຍ່ ແຫ່ງ ມົງໂກລີ, ພົບປະເຮັດວຽກກັບປະທານກຳມາທິການຄວາມໝັ້ນຄົງ ແລະ ນະໂຍບາຍຕ່າງປະເທດ ຂອງສະພາຄູຣານໃຫຍ່ ແຫ່ງ ມົງໂກລີ, ລັດຖະມົນຕີກະຊວງປ້ອງກັນປະເທດ, ລັດຖະມົນຕີກະຊວງສາທາລະນະສຸກ, ປະທານຄະນະກຳມະການຮ່ວມມືມົງໂກລີ-ລາວ ໂດຍເຫັນວ່າການນຳຂັ້ນສູງ ຕະຫລອດຮອດຂະແໜງການກ່ຽວຂ້ອງຂອງປະເທດມົງໂກລີ ໄດ້ໃຫ້ຄວາມສຳຄັນເປັນຢ່າງດີ ຕໍ່ຄະນະຜູ້ແທນຝ່າຍລາວ

ໃນໂອກາດນີ້, ຄະນະ ຍັງໄດ້ເຂົ້າຮ່ວມກອງປະຊຸມວິທະຍາສາດ "ວັນຄົບຮອບ 60 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດລະຫວ່າງ ມົງໂກລີ ແລະ ສປປລາວ" ເຊິ່ງຫົວໜ້າຄະນະຜູ້ແທນໄດ້ກ່າວຄຳປາໄສຢູ່ໃນກອງປະຊຸມວິທະຍາສາດດັ່ງກ່າວ.

ນອກຈາກນີ້, ຄະນະຜູ້ແທນໄດ້ໄປເຄື່ອນໄຫວຢ້ຽມຢາມຢູ່ແຂວງອາຮ໌ຮັງໄກ ເຊິ່ງເປັນແຂວງໜຶ່ງຂອງມົງໂກລີ ທີ່ມີທຳມະຊາດທີ່ສວຍງາມ ແລະ ອຸດົມສົມບູນ, ມີພື້ນຖານການຜະລິດກະສິກຳທີ່ມີຊື່ສຽງ, ມີສະຖານທີ່ປະຫວັດສາດ, ວັດທະນະທຳ ແລະ ເປັນເອກະລັກຂອງມົງໂກລີ ຕື່ມອີກ.

# ທະນາຄານພົງສະຫວັນ ມອບເງິນຊ່ວຍເຫລືອ ໃຫ້ກອງທຶນຊ່ວຍເຫລືອສັງຄົມຂອງ ສພຊ



(ສພຊ) ທະນາຄານພົງສະຫວັນ ໄດ້ນຳເງິນຈຳນວນ 30 ລ້ານກີບ ມອບໃຫ້ກອງທຶນຊ່ວຍເຫລືອສັງຄົມຂອງສະພາແຫ່ງຊາດ ເພື່ອນຳໄປມອບຕໍ່ໃຫ້ປະຊາຊົນທີ່ຖືກໄພພິບັດຢູ່ແຂວງຕ່າງໆທົ່ວປະເທດ ໂດຍການມອບຂອງທ່ານ ໄພບູນ ພົງສະຫວັນ ເລຂາໜ່ວຍພັກກຸ່ມບໍລິສັດ ພົງສະຫວັນ, ຜູ້ອຳນວຍການໃຫຍ່ທະນາຄານພົງສະຫວັນ ແລະ ຮັບໂດຍທ່ານ ນາງ ມະນີວັນ ເຍຍປາວເຣີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ທັງເປັນຮອງປະທານກອງທຶນຊ່ວຍເຫລືອສັງຄົມຂອງສະພາແຫ່ງຊາດ (ສພຊ); ມີທ່ານ ນາງ ມະໂນລາ ຫລວງໂຄດ ຮອງຜູ້ອຳນວຍການໃຫຍ່, ບັນດາທ່ານຮອງປະທານ, ຄະນະຮັບຜິດຊອບກອງທຶນດັ່ງກ່າວ ແລະ ຜູ້ຊ່ວຍວຽກຂອງສອງຝ່າຍເຂົ້າຮ່ວມເປັນສັກຂີພິຍານ.

ໃນໂອກາດນີ້, ທ່ານ ນາງ ມະນີວັນ ເຍຍປາວເຣີ ໄດ້ແຈ້ງໃຫ້ຊາບກ່ຽວກັບສະຖານະການໄພພິບັດນ້ຳຖ້ວມຢູ່ແຂວງຕ່າງໆໃນປັດຈຸບັນ ໂດຍສະເພາະແມ່ນບັນດາແຂວງພາກເໜືອ ເຊິ່ງປະຊາຊົນຈຳນວນຫລາຍໄດ້ຮັບຜົນກະທົບຕໍ່ໄພພິບັດດັ່ງກ່າວ; ດັ່ງນັ້ນ, ກອງທຶນຊ່ວຍເຫລືອສັງຄົມຂອງສະພາແຫ່ງຊາດ ຈຶ່ງເປັນສ່ວນໜຶ່ງທີ່ເຂົ້າໄປຊ່ວຍເຫລືອບັນເທົາທຸກໃຫ້ປະຊາຊົນທີ່ປະສົບໄພພິບັດຄັ້ງນີ້ ທັງສະແດງຄວາມຂອບໃຈທະນາຄານພົງສະຫວັນ ທີ່ໄດ້ໃຫ້ການສະໜັບສະໜູນກອງທຶນເຫລືອສັງຄົມຂອງສະພາແຫ່ງຊາດ ໃນໄລຍະຜ່ານມາ ແລະ ໃນຄັ້ງນີ້ ທັງຫວັງວ່າຈະໄດ້ຮັບການສະໜັບສະໜູນອີກໃນຕໍ່ໜ້າ.

ພ້ອມດຽວກັນນັ້ນ, ຄະນະເລຂາທິການສະພາແຫ່ງຊາດ ກໍຄືຄະນະກອງທຶນຊ່ວຍເຫລືອສັງຄົມຂອງສະພາແຫ່ງຊາດ ໄດ້ມອບໃບຍ້ອງຍໍໃຫ້ທະນາຄານພົງສະຫວັນ ເນື່ອງຈາກມີຜົນງານດີເດັ່ນໃນການຊ່ວຍເຫລືອທຶນຊ່ວຍຜູ້ປະສົບໄພພິບັດໃນຄັ້ງນີ້ ໂດຍການມອບຂອງທ່ານ ນາງ ມະນີວັນ ເຍຍປາວເຣີ ແລະ ຮັບຂອງທ່ານ ໄພບູນ ພົງສະຫວັນ ເຊິ່ງມີຜູ້ກ່ຽວຂ້ອງຂອງສອງຝ່າຍເຂົ້າຮ່ວມເປັນສັກຂີພິຍານ.

(ນາງ ປາກາລັກ ພົມມີໄຊ)

# ສພຂ ເຊກອງ ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ

ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ), ທ່ານ ດົງເຜັດ ພະຍົນ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ, ປະທານສະພາປະຊາຊົນແຂວງ (ສພຂ) ເຊກອງ ໄດ້ໃຫ້ສຳພາດວ່າ: ແຕ່ກອງປະຊຸມປະຖົມມະລຶກຂອງ ສພຊ ຊຸດທີ IX ຮອດປັດຈຸບັນ, ຄະນະ ສສຊ ກໍຄື ສພຂ ຍາດໄດ້ຜົນງານທີ່ພົ້ນເດັ່ນຫລາຍດ້ານ ຄື:

**ດ້ານນິຕິກຳ:** ພິຈາລະນາ ຮັບຮອງເອົານິຕິກຳໃຕ້ກົດໝາຍ ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຈຳນວນ 2 ສະບັບ, ສ້າງຂໍ້ຕົກລົງຮ່ວມ ວ່າດ້ວຍການພົວພັນວຽກງານ ລະຫວ່າງ ສພຂ ກັບອົງການປົກຄອງແຂວງເຊກອງ 1 ສະບັບ ເຊິ່ງມີເນື້ອໃນທີ່ຕົກລົງກັນ ໃນການສ້າງ ແລະ ປັບປຸງນິຕິກຳສຳຄັນຂອງທ້ອງຖິ່ນ (ການສ້າງຂໍ້ຕົກລົງເຈົ້າແຂວງທີ່ຈະນຳສະເໜີ ສພຂ ພິຈາລະນາຮັບຮອງເອົາ); ຄົ້ນຄວ້າບັນຫາທີ່ສຳຄັນພື້ນຖານຂອງທ້ອງຖິ່ນ ທີ່ຈະສະເໜີໃຫ້ ສພຂ ພິຈາລະນາຮັບຮອງເອົາ; ການຄົ້ນຄວ້າບຸກຄະລາກອນ ທີ່ຈະສະເໜີໃຫ້ ສພຂ ເລືອກຕັ້ງ ຫລື ພິຈາລະນາ ຮັບຮອງເອົາການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ; ຄົ້ນຄວ້າ, ປຶກສາຫາລື ກ່ຽວກັບການແກ້ໄຂຄຳຮ້ອງທຸກຂອງປະຊາຊົນ; ການເຂົ້າຮ່ວມ ແລະ ໃຫ້ການຊີ້ແຈງຕໍ່ກອງປະຊຸມ ສພຂ; ການແກ້ໄຂຜົນຂອງການຕິດຕາມກວດກາ; ການຈັດຕັ້ງຜັນຂະຫຍາຍຜົນສຳເລັດກອງປະຊຸມສະໄໝສາມັນຂອງ ສພຂ; ພົວພັນ, ປະສານສົມທົບ ກ່ຽວກັບບັນຫາສຳຄັນອື່ນໆ ທີ່ຈຳເປັນ; ພ້ອມນັ້ນ, ໄດ້ສຳເລັດການທາບທາມຮ່າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທັງໝົດ 6 ຄັ້ງ, ລວມມີ 17 ສະບັບ.

**ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ:** ໄດ້ຮັບຮອງເອົາບັນສຳຄັນພື້ນຖານຂອງທ້ອງຖິ່ນ ອອກເປັນມະຕິກອງປະຊຸມ ສພຂ ທັງໝົດ 9 ສະບັບ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ອອກເປັນມະຕິກອງປະຊຸມ ສພຂ ທັງໝົດ 10 ສະບັບ.

**ດ້ານການຕິດຕາມກວດກາ:** ຊີ້ນຳການຄົ້ນຄວ້າແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໄດ້ຮັບຄຳຮ້ອງຂໍຄວາມເປັນທຳ ທັງໝົດ 1 ເລື່ອງ ແລະ ມອບໃຫ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂສຳເລັດແລ້ວ, ໃຫ້ຄຳປຶກສາແກ່ປະຊາຊົນທັງໝົດ 3 ຄັ້ງ; ໄດ້ເຄື່ອນໄຫວຕິດຕາມກວດກາການປະຕິບັດກົດໝາຍຂອງອົງການຂອງລັດ ຂັ້ນເມືອງ ແລະ ອົງເຂດປົກປ້ອງກົດໝາຍ, ສອງກຳລັງປະກອບອາວຸດ ຢູ່ 4 ຕົວເມືອງ; ຕິດຕາມກວດກາ ແລະ ເກັບກຳຂໍ້ມູນຕາມຄຳສະເໜີຂອງປະຊາຊົນບ້ານດາກປອງ ເມືອງດາກຈຶງ; ກ່ຽວກັບຜົນກະທົບຈາກໂຄງການ ຂຸດຄົ້ນສຳຫລວດແຮ່ຄຳ ຂອງບໍລິສັດດວງຈະເລີນ; ຕິດຕາມກວດກາການ ແລະ ເກັບກຳຂໍ້ມູນ ການຈັດຕັ້ງປະຕິບັດກົດໝາຍ ກ່ຽວກັບການເຊົ່າ-ສຳປະທານທີ່ດິນ, ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ການຄຸ້ມຄອງແຮງງານ ຢູ່ເມືອງທ່າແຕງ ແຂວງເຊກອງ; ຕິດຕາມກວດກາ ຢູ່ພາກສະໜາມຮ່ວມກັບ ອົງການກວດສອບແຫ່ງລັດປະຈຳພາກໃຕ້ ຢູ່ໂຄງການກໍ່ສ້າງເສັ້ນທາງ ແຕ່ບ້ານໂພນ ເມືອງລະມາມ-ບ້ານແບ່ງ ເມືອງກະລຶມ; ຕິດຕາມກວດກາການຈັດຕັ້ງປະຕິບັດ ໂຄງການດ້ານພະລັງງານໄຟຟ້າ ເຂື່ອນເຊຂະໜານ 3, ໂຄງການຂຸດຄົ້ນແຮ່ທາດ ແລະ ໂຄງການກໍ່ສ້າງນ້ຳປະປາສຸຂາພິບານ ຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນແຂວງ-ເມືອງ ຢູ່ເມືອງດາກຈຶງ; ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຕ້ານ ແລະ ສະກັດກັ້ນ ການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ 4 ຕົວເມືອງ ແຂວງເຊກອງ ໄດ້ 5 ຄັ້ງ ແລະ ໄດ້ນຳເອົາອຸປະກອນການຕ້ານການແຜ່ລະບາດພະຍາດໂຄວິດ-19 ຈຳນວນໜຶ່ງໄປມອບໃຫ້ແກ່ປະຊາຊົນ ແລະ 2 ກຳລັງທີ່ຢູ່ຕາມຊາຍແດນ ເຊັ່ນ: ຜ້າອັດປາກ-ດັງ ຈຳນວນ 16 ແກັດ, ເຈວລ້າງມື ຈຳນວນ 18 ແກັດ, ເຫລົ້າເກົ້າສິບ ຈຳນວນ 8 ແກັດ, ຢາປາລາ ຈຳນວນ 4 ແກັດ; ຕົວເລກຜູ້ຕິດເຊື້ອໂຄວິດ-19 ທັງໝົດ 2.748 ຄົນ, ປິ່ນປົວດີແລ້ວ 2.748 ຄົນ, ຍັງປິ່ນປົວ 0 ຄົນ, ເສຍຊີວິດ 5 ຄົນ.

ທ່ານໃຫ້ຮູ້ຕື່ມວ່າ: ການສ້າງຄວາມເຂັ້ມແຂງໃຫ້ແກ່ ສພຂ ແມ່ນໄດ້ເອົາໃຈໃສ່ເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ ສພຂ ໄດ້ 6 ຄັ້ງ ເຊິ່ງນຳໃຊ້ງົບປະມານຂອງ ສພຂ ແລະ ໄດ້ຮັບການສະໜັບສະໜູນຈາກອົງການສາກົນ ຈຳນວນທັງໝົດ 272 ລ້ານກວ່າກີບ ໃນນີ້, ຮັບຈາກອົງການສາກົນ (ອັອກສຟາມ ແລະ ເຊກາ) ຈຳນວນ 243 ລ້ານກວ່າກີບ ແລະ ນຳໃຊ້ເງິນຂອງ ສພຂ 28,7 ລ້ານກວ່າກີບ ຕາມຫົວຂໍ້ການເຝິກອົບຮົມຕ່າງໆ ເຊັ່ນ ຍົກສູງຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ (ສສຂ) ໃນການຄົ້ນຄວ້າເນື້ອໃນກົດໝາຍທີ່ພົວພັນກັບການຈັດຕັ້ງແລະເຄື່ອນໄຫວຂອງ



ສພຂ, ການຄົ້ນຄວ້າ ການກະກຽມປະກອບຄຳຄິດເຫັນໃນກອງປະຊຸມຂອງ ສພຂ ກ່ອນກອງປະຊຸມສະໄໝສາມັນເທື່ອທີ 2 ຢູ່ ສພຂ, ກອງປະຊຸມເຝິກອົບຮົມສ້າງທັກສະ ແລະ ບົດຮຽນໃນການສ້າງນິຕິກຳໃຕ້ກົດໝາຍ ຢູ່ເມືອງດາກຈຶງ; ເຝິກອົບຮົມການສ້າງຄວາມເຂັ້ມແຂງ ໃຫ້ແກ່ ສສຂ ແລະ ພະນັກງານຊ່ວຍວຽກ ໃນການຕົກລົງບັນຫາສຳຄັນຂອງທ້ອງຖິ່ນ ແລະ ການຕິດຕາມກວດກາຂອງ ສສຂ ຢູ່ສະໂມສອນເມືອງລະມາມ; ເຝິກອົບຮົມການສ້າງຄວາມເຂັ້ມແຂງ ການສ້າງຄຳຖາມເຈາະຈີ້ມ, ຄຳຊັກຖາມໃນກອງປະຊຸມ ກ່ຽວກັບການຈັດສັນໂຄງການການລົງທຶນຂອງລັດ ແລະ ການຈັດສັນງົບປະມານແຫ່ງລັດ (ຂົງເຂດເສດຖະກິດ-ການເງິນ) ຢູ່ເມືອງທ່າແຕງ; ເຝິກອົບຮົມການສ້າງຄວາມເຂັ້ມແຂງ ໃຫ້ແກ່ ສສຂ ແລະ ພະນັກງານຊ່ວຍວຽກ ກ່ຽວກັບການເກັບກຳ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ກ່ຽວກັບ 15 ຕົວຊີ້ວັດຂອງສຶກສາທິການ ແລະ ກິລາ ແລະ 10 ຕົວຊີ້ວັດຂອງວຽກງານສາທາລະນະສຸກ ຢູ່ເມືອງກະລຶມ ແລະ ເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ ສສຂ ແລະ ກົງຈັກຊ່ວຍວຽກ ຂັ້ນແຂວງ ແລະ ເມືອງ ກ່ຽວກັບການເກັບກຳຂໍ້ມູນແລະການສ້າງຄຳຖາມເຈາະຈີ້ມ ໃນການຕິດຕາມກວດກາ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຂັ້ນແຂວງ ຢູ່ເມືອງກະລຶມ.

ສຳລັບການຕິດຕາມກວດກາ ຊຸກຍູ້ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ທ່ານ ດົງເຜັດ ພະຍົນ ໄດ້ກ່າວວ່າ: ຄວາມຄືບໜ້າ ໃນການຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຢູ່ແຂວງເຊກອງ ໂດຍປະຕິບັດຕາມມະຕິກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຊ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021 ວ່າດ້ວຍຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ສພຂ ເຊກອງ ໄດ້ຈັດຕັ້ງປະຕິບັດຕາມພາລະບົດບາດ ໂດຍໄດ້ເອົາໃຈໃສ່ຕິດຕາມກວດກາ ແລະ ປະເມີນໂຄງການການລົງທຶນຂອງລັດ ທີ່ກຳລັງຈັດຕັ້ງປະຕິບັດ ສຸມໃສ່ໂຄງການສືບຕໍ່ ທີ່ມີຄວາມສຳຄັນ, ມີປະສິດທິຜົນ ແລະ ມີຜົນຕອບແທນ ໃຫ້ສືບຕໍ່ຈັດຕັ້ງປະຕິບັດ ໃຫ້ສຳເລັດຕາມລະດັບຄາດໝາຍ ນອກນັ້ນ, ຍັງໄດ້ຕົກລົງຍົກເລີກບັນດາໂຄງການທີ່ບໍ່ມີປະສິດທິຜົນ ຈຳນວນໜຶ່ງ; ໄດ້ເອົາໃຈໃສ່ຊຸກຍູ້ໃຫ້ອົງການກວດສອບປະຈຳພາກໃຕ້, ກວດສອບວິສະຫະກິດນ້ຳປະປາແຂວງເຊກອງ ໄດ້ສຳເລັດ ແລະ ໄດ້ຮັບຮອງການສືບຕໍ່ການຈັດຕັ້ງປະຕິບັດຜົນການກວດສອບເພື່ອແກ້ໄຂໜີ້, ເພື່ອກ້າວໄປ ສູ່ການມີກຳໄລ, ການເປັນຕົວແບບ ໃນການປະຕິບັດພັນທະເຂົ້າງົບປະມານແຫ່ງລັດ; ໄດ້ຈັດກອງປະຊຸມຮ່ວມກັບພະແນກການທີ່ກ່ຽວຂ້ອງ, ການຈັດຕັ້ງປະຕິບັດບັນດາມາດຕະການກ່ຽວກັບການເຊົ່າສຳປະທານທີ່ດິນ ໃນການດຳເນີນກິດຈະກຳຕ່າງໆເປັນຕົ້ນ: ການປູກຝັງ-ລ້ຽງສັດ ໃຫ້ມີປະສິດທິພາບ, ປະສິດທິຜົນ; ໄດ້ເອົາໃຈໃສ່ໃນການກວດກາຂໍ້ມູນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ, ຂອງໂຄງການຜະລິດໄຟຟ້າພະລັງງານນ້ຳ, ພະລັງງານຄວາມຮ້ອນຖ່ານຫີນ ແລະ ພະລັງງານລົມ ທີ່ລັດຖະບານໄດ້ອະນຸຍາດ ໃຫ້ຈັດຕັ້ງປະຕິບັດຢູ່ ແຂວງເຊກອງ; ດຳເນີນກອງປະຊຸມຄົ້ນຄວ້າຢ່າງເລິກເຊິ່ງ ແລະ ມີຄຳເຫັນໃນການປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍເປັນຕົ້ນກົດໝາຍວ່າດ້ວຍຊັບສິນຂອງລັດ, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍແຮ່ທາດ ແລະ ກົດໝາຍວ່າດ້ວຍການສົ່ງເສີມ ການລົງທຶນ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ; ຊຸກຍູ້ອົງການປົກຄອງແຂວງໃນການປັບປຸງ, ສ້າງນິຕິກຳໃຕ້ກົດໝາຍ ເປັນຕົ້ນ ການປະເມີນລາຄາທີ່ດິນໃຫ້ທົ່ວເຖິງທຸກ ເມືອງຂອງແຂວງເຊກອງ; ຊຸກຍູ້ອົງການປົກຄອງແຂວງໃນການແບ່ງຖານຈັດເກັບລາຍຮັບລາຍຮັບ ໃຫ້ເມືອງໃຫ້ລະອຽດ, ຈະແຈ້ງ.

ຄວາມຄືບໜ້າໃນການຕິດຕາມກວດກາ, ຊຸກຍູ້ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດແຕ່ປີ 2021-2023, ສພຂ ໄດ້ເອົາໃຈໃສ່ປະຕິບັດແຜນການເຄື່ອນໄຫວຂອງຕົນ ໂດຍຕິດພັນກັບວາລະແຫ່ງຊາດ ເຊິ່ງປະຕິບັດຕາມມະຕິກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຊ ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021 ວ່າດ້ວຍຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດແຕ່ປີ 2021-2023; ເຂົ້າຮ່ວມການສ້າງ ແລະ ປັບປຸງກົດໝາຍ, ສະເໜີໃຫ້ດຳເນີນການໄວວາ, ທັນສະພາບການ, ອັນທີ່ມີແລ້ວແຕ່ບໍ່ທັນສອດຄ່ອງ, ບໍ່ທັນຮັດກຸມ ແລະ ອັນໃດບໍ່ທັນຄົບຖ້ວນ, ບໍ່ທັນຈະແຈ້ງ, ບໍ່ທັນມີ ຕ້ອງສ້າງ ແລະ ປັບປຸງ; ຊຸກຍູ້ໃຫ້ອົງການປົກຄອງແຂວງ, ເມືອງ, ບ້ານ ແລະ ສອງກຳລັງປະກອບອາວຸດ ເປັນເຈົ້າການໃນການຈັດຕັ້ງປະຕິບັດ, ສ້າງຄວາມເຂັ້ມແຂງໃຫ້ສະຖາບັນຄອບຄົວ ແລະ ລະບົບການເມືອງຢູ່ຂັ້ນບ້ານ ໃນການຕ້ານ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ສິ່ງສຳຄັນແມ່ນເຮັດໃຫ້ປະຊາຊົນ, ສະຖາບັນຄອບຄົວ, ບ້ານມີສ່ວນຮ່ວມ ແລະ ເປັນເຈົ້າການ ຮ່ວມກັບອຳນາດການປົກຄອງ ໃນການແກ້ໄຂບັນຫາຢາເສບຕິດໃຫ້ເປັນຮູບປະທຳ; ເພີ່ມທະວີການປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ບັນຫາອື່ນໆ ທີ່ກ່ຽວຂ້ອງ ເຖິງວຽກງານແກ້ໄຂບັນຫາຢາເສບຕິດຂອງເຈົ້າໜ້າທີ່ທຸກພາກສ່ວນ, ທຸກຂັ້ນ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ. ສຳຄັນແມ່ນການປະຕິບັດໜ້າທີ່ສືບສວນ-ສອບສວນ, ພິຈາລະນາຕັດສິນຄະດີ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ຕ້ອງຮັບປະກັນເຮັດໃຫ້ທຸກຂັ້ນຕອນຂອງການດຳເນີນການມີຄວາມໂປ່ງໃສຕາມກົດໝາຍ ແລະ ຮັບປະກັນຄວາມຍຸຕິທຳຢ່າງແທ້ຈິງ.

## ປະທານຄະນະ ສສຊ ເຂດ 7 ເຄື່ອນໄຫວເຮັດວຽກຢູ່ເມືອງແກ່ນທ້າວ



(ສພຊ) ວັນທີ 5 ກັນຍາຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ນຳໂດຍທ່ານ ເພັງນິລັນ ຄຳພັນເພັງ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 7 ພ້ອມດ້ວຍຄະນະ ໄດ້ນຳເອົາເນື້ອໃນຈິດໃຈຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໄປເຜີຍແຜ່ເຊື່ອມຊຶມໃຫ້ແກ່ຜູ້ມີສິດເລືອກຕັ້ງ ຢູ່ເມືອງແກ່ນທ້າວ; ເຂົ້າຮ່ວມຮັບຟັງມີບັນດາຄະນະນຳຂອງເມືອງ, ພະນັກງານອາວຸໂສບຳນານ, ທະຫານ, ຕຳຫລວດ, ພະນັກງານຫລັກແຫລ່ງຂອງເມືອງ ຕະຫລອດຮອດອຳນາດການປົກຄອງບ້ານເທສະບານເມືອງ ເຂົ້າຮ່ວມ 150 ກວ່າຄົນ.

ໃນການເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດວຽກງານທີ່ພົ້ນເດັ່ນຂອງເມືອງ ໃນໄລຍະ 6 ເດືອນຜ່ານມາ ໂດຍສັງເຂບ; ຈາກນັ້ນ, ບັນດາທ່ານ ສສຊ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນຂອງ ສພຊ ຊຸດທີ IX ໂດຍໄດ້ຍົກໃຫ້ເຫັນບາງເນື້ອໃນມະຕິກອງປະຊຸມ ສພຊ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງໂຄວິດ-19; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍຂະແໜງສຶກສາທິການ ແລະ ກິລາ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນ ທຸກຊັ້ນທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດໃນໄລຍະຜ່ານມາ ແລະ ທິດທາງແຜນການຕິດຕາມກວດກາຮອດປີ 2023 ຂອງສະພາແຫ່ງຊາດ; ມະຕິວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງຮອງນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; ມະຕິວ່າດ້ວຍການຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງສະມາຊິກລັດຖະບານ; ມະຕິວ່າດ້ວຍການເລືອກຕັ້ງປະທານອົງການກວດສອບແຫ່ງລັດ ແລະ ມະຕິວ່າດ້ວຍການຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 9 ສະບັບ.

ໂອກາດດັ່ງກ່າວ, ຄະນະຍັງໄດ້ຕິດຕາມກວດກາ ແລະ ຊຸກຍູ້ບັນດາໂຄງການກໍ່ສ້າງພື້ນຖານໂຄງລ່າງຂອງເມືອງ ເປັນຕົ້ນແມ່ນໂຄງການກໍ່ສ້າງຫ້ອງການແຜນການເມືອງ; ໂຄງການກໍ່ສ້າງຕ້ານເຈື່ອນລຽບແຄມນ້ຳເຫືອງ (ຈຸດບ້ານທ້າວແກ່ນ) ແລະ ໂຄງການກໍ່ສ້າງເສັ້ນທາງປູຢາງເທສະບານເມືອງ ຊ່ວງທີ II (ບ້ານທ້າວແກ່-ບ້ານນາບອນ-ບ້ານຫາດແດງ).

ທັງນີ້, ກໍເພື່ອເປັນການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ບັນດາເນື້ອໃນບັນຫາສຳຄັນຕ່າງໆ ທີ່ລັດຖະບານສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ ໃຫ້ຖັນແຖວພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ ແລະ ປະຊາຊົນບັນດາເຜົ່າ ຮັບຮູ້ຢ່າງກວ້າງຂວາງ ແລະ ທົ່ວເຖິງ ແນໃສ່ເຮັດໃຫ້ບັນຫາສຳຄັນພື້ນຖານຂອງຊາດ ທີ່ສະພາແຫ່ງຊາດຮັບຮອງເອົາ ໄດ້ຮັບການຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຕົວຈິງ.

(ນີ່ຕູ່ ປະສິດທິຜົງ)

# ສຳເລັດການຜັນຂະຫຍາຍເນື້ອໃນ ກອງປະຊຸມສະໄໝສາມັນເທື່ອທີ 3



(ສພຊ) ໃນລະຫວ່າງວັນທີ 29 ສິງຫາ-1 ກັນຍາ 2022 ທ່ານ ທອງສີ ເສົາສຸລິພົມ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ພ້ອມດ້ວຍຄະນະ ໄດ້ສຳເລັດການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ທີ່ເມືອງບຸນໃຕ້ ແລະ ເມືອງສຳພັນ ແຂວງຜົ້ງສາລີ; ມີບັນດາທ່ານເຈົ້າເມືອງ, ຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການອົງການລັດທຽບເທົ່າຫ້ອງການຂັ້ນເມືອງ, ກອງບັນຊາການທະຫານເມືອງ, ກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ອົງການຈັດຕັ້ງມະຫາຊົນຂັ້ນເມືອງ, ອົງການແນວລາວສ້າງຊາດເມືອງ, ສະຫະພັນນັກຮົບເກົ່າ, ໜ່ວຍບໍລິການຂອງລັດວິສາຫະກິດປະຈຳເມືອງ, ພະນັກງານ-ລັດຖະກອນ, ພະນັກງານບຳນານ ແລະ ອົງການຈັດຕັ້ງບ້ານອ້ອມຂ້າງເທສະບານເມືອງ, ບັນດາບ້ານເປົ້າໝາຍເຂົ້າຮ່ວມ ທັງໝົດ 651 ຄົນ ຍິງ 289 ຄົນ.

ການເຄື່ອນໄຫວໃນຄັ້ງນີ້, ມີ 7 ຈຸດຄື: ຈຸດເທສະບານເມືອງບຸນໃຕ້, ບ້ານອາຢາ, ບ້ານສະໂນໃໝ່ ເມືອງບຸນໃຕ້ ແລະ ຈຸດເທສະບານເມືອງສຳພັນ, ຈຸດບ້ານຫາດງາໃຕ້ (ມີບ້ານຫາດງາໃຕ້, ບ້ານຕ່າງຈາກ, ບ້ານນ້ຳງາ ແລະ ຫາດງາເໜືອ), ບ້ານຢາງເໜືອ ແລະ ບ້ານກອງສະວີ; ທັງນີ້, ກໍເພື່ອລາຍງານໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຊາບການເຄື່ອນໄຫວຂອງ ສສຊ ປະຈຳເຂດເລືອກຕັ້ງ ທັງເກັບກຳສະພາບການຢູ່ຂັ້ນຮາກຖານ; ເປັນການຊຸກຍູ້ໃຫ້ທຸກພາກສ່ວນປະກອບສ່ວນໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງແຫ່ງຊາດ ແລະ ຂອງແຂວງ ແນໃສ່ເຮັດໃຫ້ບັນຫາສຳຄັນພື້ນຖານຂອງຊາດ ທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອ 3 ຂອງ ສພຊ ຊຸດທີ IX ໄດ້ຮັບການຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຕົວຈິງຂອງແຕ່ລະພາກສ່ວນ.

ເນື້ອໃນທີ່ມາຈັດຕັ້ງເຜີຍແຜ່ປະກອບມີວຽກງານບຸກຄະລາກອນ ປະກອບມີ 3 ມະຕິ; ວຽກງານຂົງເຂດລັດຖະບານ ປະກອບມີ 6 ມະຕິ; ວຽກງານຂົງເຂດສະພາແຫ່ງຊາດ ມີ 2 ມະຕິ; ວຽກງານສ້າງ ແລະ ປັບປຸງກົດໝາຍ ປະກອບມີ 9 ມະຕິ.

ເພື່ອເຮັດໃຫ້ການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ໃນຄັ້ງນີ້ ໄດ້ຮັບຮູ້, ເຊື່ອມຊຶມ ແລະ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ໄດ້ຮັບປະສິດທິຜົນ, ທ່ານ ທອງສີ ເສົາສຸລິພົມ ໄດ້ເນັ້ນບາງບັນຫາ ເປັນຕົ້ນແມ່ນການເອົາໃຈໃສ່ຂອງລັດຖະບານໃນການຄຸ້ມຄອງປະລິມານເງິນເພື່ອພັດທະນາເສດຖະກິດ-ສັງຄົມໃຫ້ມີການເຕີບໂຕສົມຄູ່ກັບການເພີ່ມຂຶ້ນຂອງບໍລິມາດເງິນ ພ້ອມທັງປະກັນການຄຸ້ມຄອງເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນລະດັບທີ່ໄດ້ກຳນົດໃນມະຕິຂອງສະພາແຫ່ງຊາດ ດ້ວຍການປະຕິບັດມາດຕະການຊຸກຍູ້ສົ່ງເສີມການຜະລິດພາຍໃນ ເພື່ອຕອບສະໜອງການຊົມໃຊ້ຂອງສັງຄົມ, ທົດແທນການນຳເຂົ້າ ແລະ ສົ່ງອອກ; ເອົາໃຈໃສ່ຈັດສັນເຂດການຜະລິດຢ່າງມີຈຸດສຸມ ຕາມເງື່ອນໄຂທ່າແຮງຂອງແຕ່ລະທ້ອງຖິ່ນ ພ້ອມທັງກວດກາ ແລະ ປັບປຸງຄືນລະບົບຊົນລະປະທານໃຫ້ຮັບປະກັນໄດ້ ການຕ້ານນ້ຳຖ້ວມ, ຕ້ານແລ້ງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ. ເອົາໃຈໃສ່ຊຸກຍູ້ສົ່ງເສີມ ການເຂົ້າເຖິງແຫລ່ງທຶນ ແລະ ສິນເຊື່ອ ເພື່ອຮັບປະກັນໃຫ້ການຜະລິດກະສິກຳໃຫ້ທັນລະດູການ ແລະ ບັນລຸຕາມແຜນການ; ເອົາໃຈໃສ່ຄຸ້ມຄອງການບໍລິຫານລັດ ແລະ ແກ້ໄຂປາກົດການຫຍໍ້ທໍ້ທີ່ເກີດຂຶ້ນ ໃນທຸກຂົງເຂດຂອງສັງຄົມໃຫ້ໄປຕາມກົດໝາຍ, ຫລັກການ, ເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ ໃຫ້ມີຜົນສັກສິດ, ມີປະສິດທິພາບ, ປະສິດທິຜົນສູງ ແລະ ມີຄວາມເຂັ້ມງວດ; ເອົາໃຈໃສ່ປະຕິບັດວຽກງານ 3 ສ້າງ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໃຫ້ມີຈຸດສຸມ, ມີການແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ແລະ ທ້ອງຖິ່ນຢ່າງຈະແຈ້ງ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ການປົກຄອງຂັ້ນທ້ອງຖິ່ນ ມີຄວາມເປັນເຈົ້າການຫລາຍຂຶ້ນ ແນໃສ່ການຈັດຕັ້ງປະຕິບັດວາລະແຫ່ງຊາດໃຫ້ບັນລຸຕາມລະດັບຄາດໝາຍທີ່ໄດ້ກຳນົດ ໂດຍສະເພາະການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ.

ໂອກາດທີ່ຄະນະທີ່ເຄື່ອນໄຫວໃນຄັ້ງນີ້ ໄດ້ນຳເອົາເກືອຈຳນວນໜຶ່ງ ມູນຄ່າ 2 ລ້ານກວ່າກີບ ໄປມອບໃຫ້ກັບພໍ່ແມ່ປະຊາຊົນບ້ານດັ່ງກ່າວອີກດ້ວຍ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ອຸດົມໄຊ ລົງຢ້ຽມຢາມຄອບຄົວ ຜູ້ປະສົບໄພພິບັດນ້ຳຖ້ວມ ຢູ່ເມືອງນາໝໍ້





(ສພຂ) ໃນເດືອນສິງຫາ 2022 ທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ (ສພຂ) ແລະ ທ່ານ ທອງຄານ ວັດສະດາກອນ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ເຄື່ອນໄຫວ ເບິ່ງສະພາບໄພພິບັດນ້ຳຖ້ວມ ຢູ່ເມືອງນາໝໍ້, ມີທ່ານ ສົມຈັນ ທາວີວັນຮັກ ຮອງເຈົ້າເມືອງ ເມືອງນາໝໍ້, ທ່ານ ນາງ ບົວພອນ ແກ້ວມະນີ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງນາໝໍ້ ແລະ ຄະນະຮັບຜິດຊອບເຂົ້າຮ່ວມ.

ທ່ານ ສົມຈັນ ທາວີວັນຮັກ ໄດ້ຕາງໜ້າຄະນະຄຸ້ມຄອງໄພພິບັດຂັ້ນເມືອງ ລາຍງານສະພາບເຫດການໄພພິບັດທີ່ເກີດຂຶ້ນຈາກລົມພາຍຸໝູນເຂດຮ້ອນ ມາອອນ ຢູ່ເມືອງນາໝໍ້ ເຊິ່ງໃຫ້ຮູ້ວ່າ: ຕາມການເກັບກຳຂໍ້ມູນຄັ້ງວັນທີ 28-30 ສິງຫາ 2022 ສາມາດສັງລວມບ້ານທີ່ຖືກຜົນກະທົບມີ 13 ບ້ານ, ມີຄົວເຮືອນຖືກຜົນກະທົບ 437 ຄົວເຮືອນ ພົນລະເມືອງ 2.444 ຄົນ ຍິງ 1.199 ຄົນ. ຖືກຜົນກະທົບຮ້າຍແຮງ 253 ຄົວເຮືອນ, ພົນລະເມືອງ 1,389, ຍິງ 696 ໃນນີ້ ຖືກນ້ຳພັດໄຫລ 67 ຄົວເຮືອນ, ພົນລະເມືອງ 691 ຄົນ, ຍິງ 218 ຄົນ ແລະ ການແກ້ໄຂສຸກເສີນເບື້ອງຕົ້ນແມ່ນນຳໃຊ້ກອງທຶນໄພພິບັດຂັ້ນເມືອງຊື້ເຂົ້າສານໜຽວໃຫ້ປະຊາຊົນ 4 ບ້ານ (ແກ້ໄຂສະເພາະໜ້າ), ໄດ້ປຸກລະດົມກຳລັງຊາວໜຸ່ມ, 2 ກຳລັງ ປກຊ-ປກສ ຊ່ວຍອະນາໄມ, ຟື້ນຟູ ແລະ ອື່ນໆ.

ຈາກນັ້ນ, ທ່ານ ຄຳດີ ວົງລ້ອມ ປະທານ ສພຂ ໄດ້ມີຄຳເຫັນສະແດງຄວາມເສຍໃຈ ແລະ ຢ້ຽມຢາມຖາມຂ່າວຄອບຄົວທີ່ຖືກຜົນກະທົບ ແລະ ເຫດການທີ່ເກີດຂຶ້ນ, ຜ່ານການຮັບຟັງການລາຍງານເຫັນວ່າ ສະພາບທີ່ເກີດຂຶ້ນມີຄວາມຮ້າຍແຮງ ແລະ ສົ່ງຜົນກະທົບໃນຫລາຍດ້ານ ແຕ່ຍ້ອນຄວາມເອົາໃຈໃສ່ຂອງການນຳເມືອງນາໝໍ້ ແລະ ຄະນະຄຸ້ມຄອງໄພພິບັດຂັ້ນເມືອງ, ຂັ້ນແຂວງ ຈຶ່ງເຮັດໃຫ້ບັນຫາດັ່ງກ່າວໄດ້ຮັບການແກ້ໄຂ ແລະ ບັນເທົາລົງ. ຕໍ່ກັບເຫດການດັ່ງກ່າວນັ້ນ, ສພຂ ກໍໄດ້ປຸກລະດົມກຳລັງຊາວໜຸ່ມເຂົ້າຮ່ວມກັບຂະບວນການຊາວໜຸ່ມຕະລຸມບອນຂອງຊາວໜຸ່ມແຂວງ ເພື່ອຊ່ວຍໃນການອະນາໄມ ແລະ ຟື້ນຟູ ພ້ອມທັງລະດົມວັດຖຸປັດໄຈຈາກພະນັກງານ-ລັດຖະກອນພາຍໃນ ສພຂ ໄດ້ຈຳນວນ 10 ລ້ານກວ່າກີບ ເພື່ອນຳໄປຈັດຊື້ອາຫານການກິນ, ເຄື່ອງໃຊ້ທີ່ຈຳເປັນ ເພື່ອນຳໄປມອບໃຫ້ແກ່ຜູ້ປະສົບໄພ ແລະ ພ້ອມທັງຈະສືບຕໍ່ລະດົມວັດຖຸປັດໄຈຈາກສະພາແຫ່ງຊາດ, ອົງການຈັດຕັ້ງຕ່າງໆ ເພື່ອນຳຊ່ວຍແກ້ບັນຫາໄພພິບັດໃນຄັ້ງນີ້ໃຫ້ດີຂຶ້ນ.

ໂອກາດດັ່ງກ່າວ, ທ່ານຍັງໄດ້ລົງຢ້ຽມຢາມຄອບຄົວພໍ່-ແມ່ປະຊາຊົນ ແລະ ສະຖານທີ່ຖືກຜົນກະທົບເປັນຕົ້ນແມ່ນເຮືອນຊານປະຊາຊົນເຂດແຄມນ້ຳ, ຫ້ອງການ, ໂຮງໝໍ, ໂຮງຮຽນ, ຕະຫລາດ ແລະ ອື່ນໆ.

(ແສງພອນ ອິນນະລົງ)

# ປະທານ ສພຂ ຄຳມ່ວນ ສຳເລັດການ ເຄື່ອນໄຫວພົບປະ, ຢ້ຽມຢາມຜູ້ມີສິດເລືອກຕັ້ງ

(ສພຂ) ໃນລະຫວ່າງວັນທີ 1-2 ກັນຍາ 2022 ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຄຳມ່ວນ ໄດ້ເຄື່ອນໄຫວຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ II ຢູ່ 3 ເມືອງຄື: ໜອງບົກ, ຫີນບູນ ແລະ ຄູນຄຳ ເຊິ່ງນຳໂດຍທ່ານ ບຸນມີ ພິມມະສອນ ປະທານ ສພຂ ພ້ອມດ້ວຍຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 12 ແລະ ສສຂ ປະຈຳເຂດເລືອກຕັ້ງເມືອງ ໂດຍໄດ້ຮັບການຕ້ອນຮັບຢ່າງອົບອຸ່ນຈາກທ່ານເຈົ້າເມືອງ ແລະ ຮອງເຈົ້າເມືອງ ພ້ອມດ້ວຍບັນດາທ່ານຄະນະປະຈຳພັກເມືອງ, ພະນັກງານ-ລັດຖະກອນ, ປກຊ-ປກສ, ເລຂາພັກບ້ານເຂົ້າຮ່ວມ.

ວາລະການຈັດຕັ້ງເຜີຍແຜ່ຜົນສຳເລັດຄັ້ງນີ້ ໄດ້ຮັບຟັງການລາຍງານໂດຍສັງເຂບກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ທີ່ຕິດພັນກັບສອງວາລະແຫ່ງຊາດ ກໍຄືວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ທິດທາງແຜນການໃນຕໍ່ໜ້າຂອງເມືອງ. ຈາກນັ້ນ, ສສຊ ແລະ ສສຂ ໄດ້ຜັດປ່ຽນເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ແລະ ຂອງ ສພຂ ຊຸດທີ II ເຊິ່ງໄດ້ພິຈາລະນາ ແລະ ຮັບຮອງເອົາຫລາຍບັນຫາທີ່ເປັນພື້ນຖານສຳຄັນຂອງປະເທດຊາດຄື: ວຽກງານຂອງລັດຖະບານ; ວຽກງານຂອງໄອຍະການປະຊາຊົນສູງສຸດ; ວຽກງານຂອງສະພາແຫ່ງຊາດ; ວຽກງານສ້າງ ແລະ ປັບປຸງກົດໝາຍ ທັງໄດ້ລົງຄະແນນສຽງຮັບຮອງເອົາມະຕິກອງປະຊຸມ ສພຊ ທັງໝົດ 20 ສະບັບ ດ້ວຍຄະແນນສຽງເຫັນດີຫລາຍກວ່າເຄິ່ງໜຶ່ງຂອງຈຳນວນ ສສຊ ສະເລ່ຍຄະແນນສູງສຸດ 99% ແລະ ຕ່ຳສຸດ 79% ເຊິ່ງກອງປະຊຸມດັ່ງກ່າວ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ເຂົ້າສູ່ຊີວິດຕົວຈິງ, ແມ່ນຫມາກຜົນແຫ່ງສະຕິປັນຍາ, ການຍົກສູງຄວາມຮັບຜິດຊອບການເມືອງຂອງບັນດາ ສສຊ, ຄວາມຕັດສິນໃຈ ຂອງລັດຖະບານ, ກະຊວງ, ອົງການທີ່ກ່ຽວຂ້ອງ ທີ່ຈະສືບຕໍ່ພັດທະນາປະເທດຊາດ ໃນສະພາບມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໃຫ້ບັນລຸຕາມຄາດຫມາຍທີ່ວາງໄວ້, ນຳເອົາປະເທດຊາດກ້າວຂຶ້ນຢ່າງໜັກແໜ້ນ. ພ້ອມນັ້ນ, ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຄຳມ່ວນ ຊຸດທີ II ທີ່ດຳເນີນຂຶ້ນໃນວັນທີ 23-24 ສິງຫາ 2022 ທີ່ສະໂມສອນໃຫຍ່ຂອງແຂວງຄຳມ່ວນ ໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງແຂວງ, ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳ 6ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022, ການຮັບຮອງເອົາບຸກຄະລາກອນຂອງອົງການປົກຄອງແຂວງ ແລະ ບັນຫາອື່ນໆ.

(ເອື້ອ ມະໂນສິງ)

# ມອບ-ຮັບໃບຍ້ອງຍໍໃຫ້ແກ່ບໍລິສັດທີ່ສະໜັບສະໜູນ



(ສພຊ) ຕອນແລງວັນທີ 31 ສິງຫາ 2022 ທີ່ສະພາປະຊາຊາຊົນແຂວງ (ສພຂ) ໄຊສົມບູນ ໄດ້ຈັດພິທີມອບ-ຮັບໃບຍ້ອງຍໍໃຫ້ແກ່ບໍລິສັດ ຫລັກໄຊ ກໍ່ສ້າງ ຈຳກັດ ທີ່ໄດ້ປະກອບສ່ວນ ແລະ ໃຫ້ການສະໜັບສະໜູນ ສພຂ ເຊິ່ງທ່ານ ແດງ ປະທຸມທອງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18, ປະທານ ສພຂ ໄຊສົມບູນ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບທ່ານ ຄຳໄຊ ບຸນມີສິດາວົງ ປະທານບໍລິສັດ ຫລັກໄຊ ກໍ່ສ້າງ ຈຳກັດ ພ້ອມດ້ວຍຄະນະ.

ໂອກາດດັ່ງກ່າວນີ້, ທ່ານ ສົມດີ ຈັນທະວົງ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ສະມາຊິກສະພາປະຊາຊົນແຂວງໄຊສົມບູນ ປະຈຳເຂດເລືອກຕັ້ງເມືອງທ່າໂທມ ໄດ້ກ່າວຈຸດປະສົງໃຫ້ຮູ້ວ່າ ພິທີຄັ້ງນີ້ ແມ່ນເພື່ອມອບໃບຍ້ອງຍໍ ຫລື ໃບກຽດຕິຄຸນ ໃຫ້ແກ່ບໍລິສັດດັ່ງກ່າວ ທີ່ໄດ້ປະກອບສ່ວນ ແລະ ໃຫ້ການສະໜັບສະໜູນເປັນວັດຖຸຈິດໃຈແກ່ການເຄື່ອນໄຫວວຽກງານຂອງ ສພຂ ໄຊສົມບູນ ເປັນຈຳນວນ 5 ລ້ານກີບ ເຊິ່ງຄະນະປະຈຳ ສພຂ ໄຊສົມບູນ ໄດ້ມອບຈຳນວນເງິນດັ່ງກ່າວ ໃຫ້ແກ່ສະມາຄົມນັກສຶກສາທີ່ເປັນພະນັກງານ-ລັດຖະກອນ ພາຍໃນແຂວງໄຊສົມບູນ ໄດ້ສຶກສາຢູ່ທີ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເປັນທີ່ຮຽບຮ້ອຍແລ້ວ.

ໃນໂອກາດນີ້, ທ່ານ ແດງ ປະທຸມທອງ ໄດ້ສະແດງຄວາມຂອບໃຈ, ຍ້ອງຍໍ ແລະ ຊົມເຊີຍ, ພ້ອມກ່າວຄຳອວຍພອນປະທານບໍລິສັດ ຫລັກໄຊ ກໍ່ສ້າງ ຈຳກັດ ຈົ່ງສືບຕໍ່ທຸລະກິດຂອງທ່ານ ໃຫ້ມີຄວາມສີວິໄລ, ຈະເລີນກ້າວໜ້າຂຶ້ນໄປເລື້ອຍໆ ແລະ ມອບໃຫ້ຍ້ອງຍໍໃຫ້ແກ່ທ່ານ ຄຳໄຊ ບຸນມີສິດາວົງ ຢ່າງເປັນທາງການ.

ປະທານບໍລິສັດ ຫລັກໄຊ ກໍ່ສ້າງ ຈຳກັດ ໄດ້ກ່າວຄຳຂອບໃຈ ທັງໄດ້ກ່າວວ່າ: ຈະສົ່ງເສີມ, ປະກອບສ່ວນ ແລະ ໃຫ້ການສະໜັບສະໜູນ ໃນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຂອງ ສພຂ ໄຊສົມບູນ ຕື່ມອີກໃນຕໍ່ໜ້າ.

(ນາງ ອຳໄພພອນ ແກ້ວວິໄລ)

108 ສາລະ

# ການປົກປັກຮັກສາ ແລະ ຄຸ້ມຄອງແຫລ່ງມໍລະດົກໂລກ

ໂດຍ: ດອກຫຍ້າ

ການປົກປັກຮັກສາແຫລ່ງມໍລະດົກໂລກ ໝາຍເຖິງການປົກປັກຮັກສາໄວ້ຄຸນຄ່າ, ເອກະລັກ ແລະ ຄວາມຄົບຖ້ວນສົມບູນທາງດ້ານອົງປະກອບ ຂອງແຫລ່ງມໍລະດົກດັ່ງກ່າວໃຫ້ມີຄວາມສົມບູນ ແລະ ໝັ້ນຄົງຕະຫລອດໄປ ຢາກເຮັດໄດ້ຄືແນວນັ້ນມັນຮຽກຮ້ອງໃຫ້ພວກເຮົາຕ້ອງຮູ້ປັດໄຈສຳຄັນ ທີ່ເປັນກະແຈນຳໄປສູ່ຊ່ອງທາງໃນການສົ່ງເສີມອານຸລັກແຫລ່ງມໍລະດົກແບບຍືນຍົງ ເຊິ່ງບັນດາປັດໄຈສຳຄັນ ທີ່ເປັນກະແຈໄປສູ່ຊ່ອງທາງໃນການສົ່ງເສີມ ການອານຸລັກແຫລ່ງມໍລະດົກແບບຍືນຍົງນັ້ນ ຕ້ອງເອົາໃຈໃສ່ສ້າງຄວາມຮູ້ ແລະ ປູກຈິດສຳນຶກໃຫ້ແກ່ຊຸມຊົນ ໂດຍການພັດທະນາຍົກລະດັບຄວາມຮູ້ຄວາມສາມາດ ແລະ ປູກຈິດສຳນຶກຢ່າງກວ້າງຂວາງຕໍ່ກັບຄວາມໝາຍຄວາມສຳຄັນ ຂອງແຫລ່ງມໍລະດົກຕໍ່ຊຸມຊົນ ແລະ ນັກທ່ອງທ່ຽວ ໂດຍການໃຫ້ຂໍ້ມູນຂ່າວສານທີ່ຖືກຕ້ອງ ແລະ ເປັນປະໂຫຍດ, ຈັດການເຝິກອົບຮົບ ແລະ ອື່ນໆ.

ໂດຍທົ່ວໄປແລ້ວ ແຫລ່ງມໍລະດົກໂລກໃດໜຶ່ງ ຕ້ອງມີບັນດາເຄື່ອງມືທີ່ເປັນມາດຕະການຊ່ວຍໃນການຄຸ້ມຄອງ ໂດຍນຳໃຊ້ເຄື່ອງມືທາງດ້ານກົດໝາຍ, ນິຕິກຳ ແລະ ລະບຽບການ ແມ່ນເຄື່ອງມືອັນສັກສິດທີ່ມີປະສິດທິຜົນ ທັງເປັນບ່ອນອີງ ແລະ ເປັນບັນທັດຖານໃນການຍ້ອງຍໍຊົມເຊີຍຕໍ່ຜູ້ທີ່ມີສ່ວນຮ່ວມໃນການປະກອບສ່ວນປົກປັກຮັກສາ ແລະ ປັບໃໝໃສ່ໂທດຕໍ່ຜູ້ທີ່ລ່ວງລະເມີດ, ບຸກລຸກ ແລະ ການກະທຳຜິດ ຕໍ່ບັນດາແຫລ່ງມໍລະດົກໂລກ ຕ້ອງລະອຽດອ່ອນ, ຮັດກຸມ, ເຄັ່ງຄັດທີ່ສຸດ ແລະ ຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງວຽກງານດັ່ງກ່າວ ຖ້າບໍ່ດັ່ງນັ້ນ ມັນຈະກາຍເປັນຊ່ອງຫວ່າງໃຫ້ແກ່ການຝ່າຝືນບັນດາລະບຽບການສະເພາະ ຂອງແຫລ່ງມໍລະດົກໂລກທີ່ໄດ້ກຳນົດໄວ້.



ການຄຸ້ມຄອງ, ບໍລິຫານແຫລ່ງມໍລະດົກໂລກນັ້ນ ກ່ອນອື່ນໝົດ ຕ້ອງໄດ້ມີການຄາດຄະເນ ຫລື ປະເມີນຜົນເສຍຫາຍທີ່ຈະເກີດຂຶ້ນແກ່ມໍລະດົກໂລກ ເພື່ອສ້າງມາດຕະການສະກັດກັ້ນ, ແກ້ໄຂຢ່າງເໝາະສົມ ແລະ ທັນການ ເຊິ່ງຍຸດທະວິທີຂອງການຄຸ້ມຄອງ ແລະ ປົກປັກຮັກສາມໍລະດົກໂລກ ແມ່ນຕ້ອງເລີ່ມຕັ້ງແຕ່ການບຳລຸງຮັກສາເປັນປະຈຳ ຫລືໝູນວຽນໄປຕາມໄລຍະເວລາຈົນເຖິງຂັ້ນຕອນຂອງການເສີມຄວາມໝັ້ນຄົງ, ການປ້ອງກັນຄວາມເສຍຫາຍ ດ້ວຍການບູລະນະປະຕິສັງຂອນ ຈົນເຖິງຂັ້ນນຳມາດັດແປງ ເພື່ອນຳໃຊ້ປະໂຫຍດຢ່າງອື່ນ ເຊິ່ງປັດໄຈທີ່ສຳຄັນ ແລະ ຂາດບໍ່ໄດ້ໃນການສະໜັບສະໜູນໃຫ້ແກ່ວຽກງານຄຸ້ມຄອງ ແລະ ບໍລິຫານແຫລ່ງມໍລະດົກໂລກ ແມ່ນຕ້ອງມີຍຸດທະສາດ ແລະ ແຜນງານທີ່ລະອຽດ ທັງໄລຍະສັ້ນ, ກາງ ແລະ ໄລຍະຍາວ ໃນການຈັດຕັ້ງປະຕິບັດງານໂຄງການຕ່າງໆ, ຕ້ອງມີບຸກຄະລາກອນທີ່ມີວິຊາສະເພາະທີ່ແນ່ນອນ, ມີຄວາມຮູ້, ຄວາມສາມາດ ອັນຖືກຕ້ອງ ແລະ ສອດຄ່ອງກັບວຽກງານດັ່ງກ່າວ; ຕ້ອງມີງົບປະມານພຽງພໍ ໃນການສະໜັບສະໜູນໃຫ້ແກ່ວຽກງານດັ່ງກ່າວ ນັບແຕ່ວຽກງານບໍລິການດູແລຮັກສາປົກກະຕິໃນແຕ່ລະວັນ ລວມໄປເຖິງວຽກງານປະຕິສັງຂອນຂະໜາດໃຫຍ່ ທີ່ມີຄວາມຕ້ອງການທາງດ້ານງົບປະມານສູງ; ຕ້ອງມີລະບົບກວດກາ, ລາຍງານທີ່ຖືກຕ້ອງສອດຄ່ອງ ແລະ ທັນກັບສະພາບການ; ການປະກອບສ່ວນເຂົ້າໃນການອະນຸລັກ, ປົກປັກຮັກສາແຫລ່ງມໍລະດົກໂລກດ້ວຍຫລາຍຮູບແບບ ໂດຍສະເພາະການມີສ່ວນຮ່ວມຈາກສັງຄົມ ແມ່ນມີຄວາມສຳຄັນ ແລະ ຈຳເປັນທີ່ສຸດ ເພື່ອຮັບປະກັນໃຫ້ແກ່ການປ້ອງກັນທາງດ້ານກາຍະພາບຂອງແຫລ່ງມໍລະດົກດັ່ງກ່າວ.

ການໃຫ້ຂໍ້ມູນທີ່ລະອຽດຖືກຕ້ອງ ແລະ ຊັດເຈນໃຫ້ແກ່ນັກທ່ອງທ່ຽວ ແມ່ນປັດໄຈທີ່ສຳຄັນອີກຢ່າງໜຶ່ງ ທີ່ມີຄວາມສຳຄັນ ແລະ ຈຳເປັນໃນການສ້າງຄວາມເຂົ້າໃຈ ຕໍ່ແຫລ່ງມໍລະດົກໃຫ້ແກ່ນັກທ່ອງທ່ຽວ ແລະ ຜູ້ທີ່ມາຢ້ຽມຊົມ; ທັງນີ້ກໍເພື່ອເປັນການຄຸ້ມຄອງນັກທ່ອງທ່ຽວ ແລະ ຫລຸດຜ່ອນຜົນກະທົບໃນດ້ານລົບ ແລະ ເອກະລັກສະເພາະອັນໂດດເດັ່ນຕ່າງໆ ທີ່ອາດຈະເກີດຂຶ້ນຕໍ່ກັບແຫລ່ງມໍລະດົກໂລກດັ່ງກ່າວ ໂດຍບໍ່ຮູ້ໂຕ.

---

ສາລາກະວີ

**ບົດກະວີຈາກ ສສ.ຫວຽດນາມ**

ເພື່ອສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນທາງການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ (5/9/1962-5/9/2022) ແລະ ວັນເຊັນສົນທິສັນຍາມິດຕະພາບ ລາວ-ຫວຽດນາມ ຄົບຮອບ 45 ປີ (18/7/1977-18/7/2022)

## ສຽງເສບແທນສຽງໄຫ້ວ້ອນ

\# ໂດຍ: ຕັນ ທູ ຮາ

❊ ສຽງດົນຕີໂສກສະອື້ນ
ນາງກົ້ມ ຫົວຍອມຮັບ
ທ່າມກາງ ສັງຄົມແຄ້ນ
ຈິດນາງ ຄິດຢູ່ຄ້າງ

ອີນປຽກນ້ຳຕາຕົກ
ດົດກີຕາຄີ້ຄ້ອຍ
ລິດສະຫຍາຫຍາມຢຽດ
ກະປ໋ອງນ້ອຍລ່ອງໄຫວ ຜຸ້ນນາ!

❊ ໃຜນໍ ຂັບເຄື່ອນໃຫ້
ໃຜນໍ ຮັບປະກັນຮຽມ
ການເພິ່ງພາກັນດ້ວຍ
ເມື່ອນັ້ນ ນາງຮ່ຳໄຫ້

ບັນຊາສັ່ງຊີວິດ
ຊ່ວຍເຊຍໃຫ້ໄປໄດ້
ມາຍາແສນລວງຫລອກ
ຫະໄທທິ້ນໜ່າຍສະອາງ

❊ ໂອນໍ ສຸດທີ່ຮັກຂ້ອຍ
ທຸກເສັ້ນ ນາງບັນຈົງລົງ
ບາງກໍ ຄວນທຳນອງກ້ອງ
ປອຍພົມທີ່ເຄີຍງາມຢາດຍ້ອຍ

ກີຕາຄ່ອຍບັນເລງສຽງ
ດົດເບົາບາງສະທ້ອນ
ມະໂນມອງໝອງໝົ່ນ
ກໍພອຍຫຍຸ້ງສວ່ານສົນ ກັນແລ້ວ!

❊ ທຸກລາຕີຕ່າວກ້ອງ
ປຸນປຽບ ສຽງໂລຫິດໄຫລ
ແຕ່ບໍ່ ເຄືອງຫູເຈົ້າ
ສຽງກີຕາສູ້ບໍ່ໄດ້

ກີຕານັ້ນນັນສຽງ
ຫລັ່ງລະບາຍຕອງແຕ້ມ
ສຸລິຍາດວງໃຫຍ່ ເດນໍ!
ກັບນາງມານຍັກຮ້າຍ
ທີ່ໝາຍຂ້າມະນຸດຊົນ

❊ ນາງເລີຍ ຍືນລຸກຂຶ້ນ
ຮ້ອງແຜດ ສຽງຂານແຮງ
ທັງເຫລົ່າ ຍໍຍົງນິ້ວ
ດວງອາທິດຢ່າຂ້າ

ມອງເບິ່ງນະພາຜືນ
ຈາກກະໃຈຈິງແທ້
ພະນົມມືອອນວ່າ
ໃບໄມ້ດຽວຢ່າໄໝ້
ບັນເລງໄຫວ້ຕ່າງວອນ ເຈົ້າແລ້ວ!

---



ສຸກສະບາຍຫາຍໂຣຄາ

## ປະໂຫຍດ ແລະ ໂທດ ຂອງການກິນສົ້ມ

**ແປ ແລະ ຮຽບຮຽງໂດຍ: ສາວແວ່ນ**

ອັນຕະລາຍຈາກການກິນສົ້ມ ເມື່ອປຽບທຽບໃສ່ອັນຕະລາຍຈາກການກິນຂອງຫວານ ແລະ ອັນຕະລາຍຈາກການກິນເຄັມ ກໍຖືວ່າບໍ່ຮ້າຍແຮງຫລາຍປານໃດ ແຕ່ຖ້າກິນສົ້ມຫລາຍເກີນໄປ ກໍບໍ່ດີຕໍ່ຮ່າງກາຍເຊັ່ນດຽວກັນ ຄວາມສົ້ມມີສອງປະເພດຄື: ຄວາມສົ້ມຈາກການສັງເຄາະ ແລະ ຄວາມສົ້ມຈາກຜັກ ແລະ ໝາກໄມ້.

- ຄວາມສົ້ມຈາກການສັງເຄາະ: ໃນນ້ຳສົ້ມສາຍຊູມີສ່ວນປະກອບສຳຄັນແມ່ນ Glacial Acetic Acid ເຊິ່ງເປັນສານທີ່ກໍ່ໃຫ້ເກີດຄວາມສົ້ມ ຫລື ເອີ້ນວ່າ "ກົດຊິຕິກ" ໃຫ້ຄວາມສົ້ມແທນໝາກນາວ ທີ່ໃຊ້ຖ້າກິນໃນປະລິມານເລັກນ້ອຍກໍບໍ່ເປັນຫຍັງ ແຕ່ຖ້າກິນປະລິມານຫລາຍ ຈະພົບວ່າມີຜົນອັນຕະລາຍຕໍ່ຮ່າງກາຍ

- ຄວາມສົ້ມຈາກຜັກ ແລະ ໝາກໄມ້ ແມ່ນຄວາມສົ້ມຈາກໝາກໄມ້ຕ່າງໆເຊັ່ນ: ໝາກນາວ, ໝາກມ່ວງ, ໝາກຂາມ, ໝາກຍົມ, ໝາກນັດ... ຈະບໍ່ເປັນອັນຕະລາຍຫລາຍ.

● **ຜົນປະໂຫຍດຂອງການກິນສົ້ມ**

- ແກ້ໄອ-ເຈັບຄໍ ໂດຍໃຊ້ໝາກນາວ 3 ໜ່ວຍປະສົມກັບນ້ຳເຜິ້ງ 1 ບ່ວງ ຈະຊ່ວຍແກ້ອາການໄອ ແລະ ເຈັບຄໍໄດ້ດີ ເພາະສາມາດຊ່ວຍບັນເທົາອາການໄອ ແລະ ນ້ຳເຜິ້ງບັນເທົາອາການເຈັບຄໍໄດ້.

- ປ້ອງກັນການເປັນຫວັດ ໝາກນາວອຸດົມໄປດ້ວຍວິຕາມິນຊີ ແລະ ຖ້າກິນເປັນປະຈຳຈະຊ່ວຍບັນເທົາ ຫລື ປ້ອງກັນການເປັນຫວັດໄດ້.

- ກະຕຸ້ນການຍ່ອຍອາຫານ

- ຊ່ວຍບັນເທົາອາການຫິວນ້ຳ

● **ອັນຕະລາຍຂອງການກິນສົ້ມ/ອັນຕະລາຍຂອງການກິນສົ້ມ**

- ທຳລາຍແຂ້ວ ເພາະກົດທີ່ມີໃນອາຫານສົ້ມ ຈະໄປທຳຮ້າຍແຂ້ວເທື່ອລະນ້ອຍ ເຮັດໃຫ້ແຂ້ວຫ້ຽນ ທັງແຂ້ວເທິງ ແລະ ແຂ້ວລຸ່ມ ເກີດອາການເຂັດແຂ້ວ ແລະ ເຮັດໃຫ້ການອັດແຂ້ວມີຄວາມຫຍຸ້ງຍາກ ເພາະມີຄ່າເວລາ ແລະ ຄ່າໃຊ້ຈ່າຍຫລາຍ.

- ຖອກທ້ອງ: ການກິນອາຫານທີ່ມີລົດຊາດສົ້ມຫລາຍ ມັກຈະເຮັດໃຫ້ຖອກທ້ອງ, ຮ້ອນໃນ ແລະ ລະບົບນ້ຳເຫລືອງໃນຮ່າງກາຍມີບັນຫາ ຈຶ່ງເຮັດບາດແຜນານຫາຍດີ.

● **ກະດູກຜ່ອຍ:** ຄວາມສົ້ມທີ່ໄດ້ຈາກນ້ຳສົ້ມສາຍຊູ ເຖິງວ່າມັນຈະຊ່ວຍກຳຈັດກິ່ນຄາວປາ ແລະ ຫລຸດເຊື້ອແບັກທີເລຍໃນອາຫານ ແຕ່ຖ້າທ່ານກິນຫລາຍເກີນໄປ ຈະເປັນອັນຕະລາຍຕໍ່ກະດູກໄດ້.

WWW.sanook.com



# ກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ມາດຕາ 48 (ປັບປຸງ) ຂໍ້ຫ້າມສຳລັບບໍລິສັດຢາສູບ ແລະ ຜູ້ປະກອບການ**

ຫ້າມ ບໍລິສັດຢາສູບ ແລະ ຜູ້ປະກອບການ ມີພຶດຕິກຳ ດັ່ງນີ້:

1. ຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ, ຊື້ ຂາຍ ຜະລິດຕະພັນຢາສູບທີ່ບໍ່ມີຄຳເຕືອນສຸ ຂະພາບ ແລະ ສະຫຼາກ, ວັນ, ເດືອນ, ປີ ຜະລິດ, ສະແຕັມພາສີ, ອາກອນ, ຢາສູບນອກລະບົບ, ເຖື່ອນ, ເສຍຄຸນ, ຜະລິດຕະພັນຢາສູບຮຽນແບບ ຫຼື ປອມ;

2. ຜະລິດ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ຊື້ ຂາຍ ຜະລິດຕະພັນຢາສູບຮູບແບບໃໝ່ ເປັນຕົ້ນ ຢາສູບໄຟຟ້າ, ຢາສູບລະເຫີຍອາຍ, ຢາສູບຊີຊາ ຫຼື ບາຣາກູ;

3. ຜະລິດຢາສູບທີ່ບັນຈຸຫຼຸດ ຫຼື ເກີນ ຊາວກອກ ຕໍ່ໜຶ່ງຊອງ, ສິບຊອງຕໍ່ໜຶ່ງຖຸດ, ຫ້າສິບຖຸດຕໍ່ໜຶ່ງຫີບ;

4. ຂາຍຜະລິດຕະພັນຢາສູບ ໂດຍຜ່ານທາງສື່ເອເລັກໂຕຣນິກ ຫຼື ສື່ສັງຄົມອອນລາຍ;

5. ຂາຍຜະລິດຕະພັນຢາສູບໂດຍແຈກ, ແຖມຜະລິດຕະພັນຢາສູບຕົວຢ່າງ, ຫຼຸດລາຄາ,ໃຫ້ລ້າ, ແລກປ່ຽນຜະລິດຕະພັນຢາສູບ ກັບສິນຄ້າອື່ນ ຫຼື ໃຫ້ຜົນປະໂຫຍດອື່ນ;

6. ຂາຍຜະລິດຕະພັນຢາສູບ ດ້ວຍເຄື່ອງຈັກຂາຍຢາສູບແບບອັດຕະໂນມັດ;

7. ໂຄສະນາຜະລິດຕະພັນຢາສູບ ທຸກຮູບແບບ ທີ່ເປັນການຊຸກຍູ້, ສົ່ງເສີມການສູບຢາ, ການຈຳໜ່າຍ, ການຊື້ ແລະ ການຂາຍ ຜະລິດຕະພັນຢາສູບລວມທັງສະແດງຂໍ້ຄວາມ ຫຼື ສັນຍາລັກ ເພື່ອປຸກລະດົມໃຫ້ຊົມໃຊ້ຜະລິດຕະພັນຢາສູບ;

8. ອຸປະຖຳ, ສະໜັບສະໜູນ ແລະ ຈັດກິດຈະກຳສະແດງຄວາມຮັບຜິດຊອບຕໍ່ສັງຄົມ ເພື່ອຜົນປະໂຫຍດໃຫ້ແກ່ທຸລະກິດຢາສູບ;

9. ແຈກບັດເຂົ້າຊົມການແຂ່ງຂັນກິລາ, ສະແດງສິລະປະ, ວັນນະຄະດີ ຫຼື ກິດຈະກຳອື່ນ, ໃຫ້ບໍລິການກິດຈະກຳທາງສັງຄົມ, ສ່ຽງໂຊກ, ຊິງລາງວັນ ຫຼື ຜົນປະໂຫຍດອື່ນ ເພື່ອເປັນການຕອບແທນແກ່ຜູ້ຊື້ຜະລິດຕະພັນຢາສູບ ຫຼື ຜູ້ນຳເອົາສິ່ງຫຸ້ມຫໍ່ ຫຼື ສະຫຼາກ ຫຼື ສິ່ງຂອງອື່ນ ກ່ຽວກັບຜະລິດຕະພັນຢາສູບມາ ແລກປ່ຽນ ຫຼື ແລກຊື້;

10. ແຈກຜະລິດຕະພັນຢາສູບ ໃຫ້ທົດລອງສູບຢາ ໂດຍບໍ່ເສຍຄ່າ ເພື່ອເປັນການຈູງໃຈໃຫ້ປະຊາຊົນບໍລິໂພກຜະລິດຕະພັນຢາສູບ;

11. ນຳໃຊ້ເດັກທີ່ມີອາຍຸຕ່ຳກວ່າ ສິບແປດປີ ຊື້-ຂາຍ ຜະລິດຕະພັນຢາສູບ;

12. ເຮັດໃຫ້ຜູ້ຊົມໃຊ້ເກີດຄວາມເຂົ້າໃຈຜິດຕໍ່ຄຸນລັກສະນະຂອງຜະລິດຕະພັນຢາສູບ ເຊັ່ນ ເຄື່ອງໝາຍການຄ້າ, ຮູບແບບ, ສີສັນ ຫຼື ສັນຍາລັກອື່ນ;

13. ໃຫ້ສິນບົນແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

14. ແຊກແຊງການພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ນິຕິກຳ ແລະ ເອກະສານທາງດ້ານວິຊາການຂອງລັດໃນທຸກຂັ້ນ;

15. ບັງຄັບ, ນາບຂູ່, ຂັດຂວາງການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

16. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 49 (ໃໝ່) ຂໍ້ຫ້າມສຳລັບຜູ້ຈຳໜ່າຍ, ຂາຍຍ່ອຍ ຜະລິດຕະພັນຢາສູບ**

ຫ້າມ ຜູ້ຈຳໜ່າຍ, ຂາຍຍ່ອຍ ຜະລິດຕະພັນຢາສູບ ມີພຶດຕິກຳ ດັ່ງນີ້:

1. ວາງຂາຍ ຫຼື ຍິນຍອມ ໃຫ້ວາງຂາຍຜະລິດຕະພັນຢາສູບ ຢ່າງເປີດ

ອ່ານຕໍ່ສະບັບໜ້າ...




## ບຸນກະທາບບາບກະທົ້ວ

**ໂດຍ: ດົ້ນກົບເມກ**

ບາງຄົນຫລຸດປາກເວົ້າອອກມາໃນທຳນອງບໍ່ຈິງຈັງກັບຊີວິດວ່າ: ວັດກະເຂົ້າເຫລົ້າກະກິນ, ບຸນກະທາບບາບກະທົ້ວ ເຊິ່ງເບິ່ງຄືວ່າ: ຜູ້ຄິດແບບນີ້ ດີກະເອົາຊົ່ວກະເອົາ ຫລື ບາງຄົນຍັງເຂົ້າໃຈຜິດຖະໜັດວ່າ: ເຮັດບຸນແລກບາບ ຫລື ເຮັດບຸນເພື່ອທົດແທນທີ່ຕົນໄດ້ເຮັດບາບ ເຊິ່ງຄວາມຈິງບຸນກໍຄືບຸນ ບໍ່ສາມາດເອົາໄປລ້າງບາບໄດ້ມັນອາດເປັນພຽງແຕ່ຜ່ອນໜັກເປັນເບົາໄດ້.

ບາງຄົນລືມຄິດໄປວ່າ: ຖ້າບຸນເປັນສີຂາວ, ບາບຄືສີດຳ ຖ້າວ່າເອົາສີດຳໄປທາທັບສີຂາວ ເຮົາຈະເຫັນສີດຳຢູ່ຂ້າງນອກແຕ່ສີຂາວກໍບໍ່ໄດ້ຫາຍໄປໃສ ພຽງແຕ່ມັນຖືກທາທັບໃວ້ຂ້າງໃນ ເພາະມັນຄົນລະສີກັນ ເຊັ່ນດຽວຄືບຸນກັບບາບ ສັງຄົມບ້ານເຮົາມີປະເພນີວັດທະນະທຳ ຮີດ 12 ຄອງ 14, ຮີດ 12 ກໍຄື ປາງບຸນ 12 ປາງ ທີ່ຄົນລາວປະຕິບັດສືບຕໍ່ກັນມາຍາວນານຕົກມາຮອດປັດຈຸບັນນີ້ ພໍເຖິງເວລາປາງບຸນຕ່າງໆໃດ້ພົກການແລ້ວ ຕັ້ງວົງເຫລົ້າເບຍກິນດື່ມກັນຫລັງຈາກໄປໃສ່ບາດ ຢາດນ້ຳ ເຮົາອາດຕັ້ງຂໍ້ສົງໃສເປັນຄຳຖາມຂຶ້ນມາວ່າ: ຫລັງການໄປໃສ່ບາດຢາດນ້ຳວັນສຳຄັນທາງພຸດທະສາດສະໜາແລ້ວ ເປັນຫຍັງຈິ່ງຕັ້ງວົງດື່ມເຫລົ້າເບຍ?

ການມີພຶດຕິກຳດື່ມເຫລົ້າເບຍໃນມື້ວັນພະວັນສິນນີ້ ປາກົດມາດົນແລ້ວບໍ? ຜູ້ຂຽນພຽງແຕ່ເດົາເອົາວ່າ: ພຶດຕິກຳບໍລິໂພກນິຍົມມາແຮງສະເໝີ ເມື່ອໃດມີໂອກາດມັນກໍແຊກແຊງເຂົ້າໃສ່ໂລດ ຖ້າວ່າໃຜຂາດສະຕິກໍຈະຖືກດູດດຶງເຂົ້າໄປໃນກະແສຈົນບໍ່ຮູ້ສຶກໂຕ, ອະດີດພໍ່ແມ່ປູ່ຍ່າຕາຍາຍເຖິງວັນສິນໃສ່ບາດບຳເພັນພາວັນນາເພື່ອຈະເລີນສະຕິປັນຍາ ເຂົ້າວັດຟັງທຳທຸກມື້ນີ້ວັນສິນເຂົ້າວັດແລ້ວກັບມາເຮືອນຕັ້ງວົງສຸລາ....

ບຸນກະທາບບາບກະທົ້ວແທ້ໆ ຖ້າເປັນແນວນັ້ນ ແຕ່ໄລຍະຍາວອາດມີຜົນກະທົບໃສ່ວິຖີຊີວິດທີ່ດີງາມມີມາແຕ່ເກົ່າກ່ອນ, ອັນໃດດີກໍຄວນຊ່ວຍກັນຮັກສາໃວ້....!




**ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນູຄຳ ພິພັດເສລີ**

31. ພຶດຕິກຳ ໝາຍເຖິງ ການກະທຳ ຫລື ການເມີນເສີຍ;

32. ການໂຕ້ແຍ່ງ ໝາຍເຖິງ ການຊີ້ແຈງ ຕໍ່ຂໍ້ກ່າວຫາ ຫລື ຫລັກຖານ ທີ່ໄດ້ຍົກຂຶ້ນໃນໄລຍະດຳເນີນຄະດີ;

















# ພາບການເຄື່ອນໄຫວຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ສະພາແຫ່ງຊາດ ແຫ່ງ ຣາຊະອານາຈັກກຳປູເຈຍ














**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສິມນຶກ ແກ້ວໄຊຍະຈັກ